vhs DVV International

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

Education for Everyone. Worldwide.
Lifelong.

ຈົດໝາຍຂ່າວ

# ການຮຽນຮູ້ຕະຫຼອດຊີວິດ & ການສຶກສານອກໂຮງຮຽນ

## ໃນ ສປປ ລາວ ແລະ ອາຊີຕາເວັນອອກສ່ຽງໃຕ້




ສະບັບທີ
1- 2021

*Sponsored by*
Federal Ministry
for Economic Cooperation
and Development

vhs
DVV International

Education for Everyone. Worldwide.
Lifelong.



ສະບາຍດີທ່ານຜູ້ອ່ານທີ່ຮັກແພງ,

ກ່ອນອື່ນໝົດ, ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າທຸກທ່ານຄົງຈະສະບາຍດີ, ໃນໄລຍະການລະບາດຂອງພະຍາດໂຄວິດ - 19 ໄລຍະ 2 ນີ້ ພວກເຮົາກຳລັງໄລ່ຫຼັງໃນພາກພື້ນອາຊີຕາເວັນອອກສຽງໃຕ້ເຊັ່ນກັນ. ຈົນເຖິງປະຈຸບັນ ພວກເຮົາໂຊກດີຫຼາຍທີ່ຜົນກະທົບຈາກການລະບາດໃຫຍ່ໃນທົ່ວໂລກບໍ່ຮຸນແຮງຫຼາຍໃນລາວ ແລະ ກຳປູເຈຍ ຄືກັບພາກພື້ນອື່ນໆ ໃນທົ່ວໂລກ. ຢ່າງໃດກໍຕາມ, ໃນເດືອນເມສາ ແລະ ເດືອນພຶດສະພາທີ່ຜ່ານມາ ເຮົາສາມາດເຫັນໄດ້ວ່າການລະບາດໃຫຍ່ຍັງບໍ່ໄດ້ສິ້ນສຸດລົງ ແລະ ການແກ້ໄຂບັນຫາທີ່ຍືນຍົງນັ້ນກໍຄືການສັກວັກຊີນ. ຈົນກວ່າຈະເຖິງຕອນນັ້ນ ເຮົາຈະຕ້ອງປ້ອງກັນໂຕເອງໃຫ້ດີທີ່ສຸດເທົ່າທີ່ຈະເຮັດໄດ້ ດ້ວຍມາດຕະການດ້ານສຸຂະອະນາໄມ ແລະ ການຮັກສາໄລຍະຫ່າງທາງກາຍະພາບ.

ຢ່າງໃດກໍຕາມ, ມັນກໍຍັງຊ່ວຍໃຫ້ພວກເຮົາໄດ້ໝູນໃຊ້ປະໂຫຍດຈາກເຕັກໂນໂລຊີການສື່ສານໃໝ່ໆ ຫຼາຍຂຶ້ນເພື່ອໃຫ້ແນ່ໃຈວ່າພວກເຮົາຍັງສາມາດຮ່ວມມືກັບຄູ່ຮ່ວມພັດທະນາໄດ້ ແລະ ບັນລຸຈຸດປະສົງຂອງໂຄງການ. ໃນຫ້ອງການປະຈຳພາກພື້ນ ພວກເຮົາ ຄຸ້ນເຄີຍກັບການຈັດປະຊຸມກັບເພື່ອນຮ່ວມງານຜ່ານທາງອອນໄລ ແລະ ຫ້ອງການພວກເຮົາໃນກຳປູເຈຍແມ່ນໄດ້ປະຊຸມແລກປ່ຽນ ຜ່ານວີດີໂອກັນເປັນປະຈຳກັບສູນການຮຽນຮູ້ຊຸມຊົນເຊິ່ງກຳລັງຈະຫັນປ່ຽນເປັນສູນການຮຽນຮູ້ຕະຫຼອດຊີວິດ. ເຊິ່ງມັນແມ່ນສິ່ງທີ່ດີ ແລະ ຈະຊ່ວຍໃຫ້ພວກເຮົາບໍ່ເສຍເວລາໃນການພະຍາຍາມຊວຍໃຫ້ກຸ່ມດ້ອຍໂອກາດໃນການເຂົ້າເຖິງການສຶກສາ. ເນື່ອງຈາກປັນຫາຂອງການສື່ສານອອນໄລແມ່ນນັບມື້ນັບຫຼາຍຂຶ້ນ, ໃນຂະນະທີ່ພວກເຮົາກຳລັງດຳເນີນການສຶກສາຄວາມເປັນໄປໄດ້ໃນການນຳໃຊ້ເຄື່ອງມືອອນໄລໃນວຽກງານການສຶກສານອກໂຮງຮຽນ. ປະເທດລາວເປັນປະເທດທີ່ມີຄວາມທ້າທາຍໃນການເຂົ້າເຖິງກຸ່ມເປົ້າໝາຍໄດ້ຍາກ, ການນຳໃຊ້ສື່ອອນໄລ ແລະ ສື່ ດິຈິຕອລ ເບິ່ງຄືຈະມີທ່າອ່ຽງທີ່ດີ ແລະ ລະບົບທັງໝົດທີ່ມີອາດຈະຊ່ວຍໃນການປະຢັດຊັບພະຍາກອນໄດ້ຢ່າງຫຼວງຫຼາຍ ຖ້າເຮົາສາມາດຫຼຸດຜ່ອນການເດີນທາງ ແລະ ຍັງສາມາດຈັດຝຶກອົບຮົມ ແລະ ໃຫ້ຄວາມຮູ້ແກ່ກຸ່ມສ່ຽງ ແລະ ກຸ່ມດ້ອຍໂອກາດ.

ຂັ້ນຕອນສຳຄັນຢ່າງໜຶ່ງທີ່ດຳເນີນການໃນຕົ້ນປີ 2021 ຄືການເປີດໂຕສື່ໂຄສະນາ (Campaign) ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ (ALE) ຢ່າງເປັນທາງການ ເຊິ່ງຈະດຳເນີນການເປັນເວລາ 5 ປີ ພາຍໃຕ້ການຊີ້ນຳຂອງສະພາການສຶກສາຜູ້ໃຫຍ່ສາກົນ (ICAE). Campaign ນີ້ຍັງປະກອບດ້ວຍວິໄສທັດທີ່ຊັດເຈນສຳລັບ ALE: “ALE ເປັນໂຕຂັບເຄື່ອນທີ່ມີອິດທິພົນເພື່ອຄວາມເປັນກາງ, ການເປັນຢູ່ທີ່ດີ ແລະ ການປ່ຽນແປງ. ALE ສະໜອງໂອກາດການຮຽນຮູ້ ແລະ ການສຶກສາທີ່ມີຄຸນນະພາບ ຍືດຢຸ່ນ ເຂົ້າເຖິງໄດ້ສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່ ຕະຫຼອດຊ່ວງຊີວິດ. ALE ຕອບສະໜອງຄວາມຕ້ອງການຂອງບຸກຄົນ ແລະ ກຸ່ມຄົນໃນບໍລິບົດການດຳລົງຊີວິດ ແລະ ສະພາບແວດລ້ອມການຮຽນຮູ້ທີ່ແຕກຕ່າງກັນ. ALE ຊ່ວຍໃຫ້ຄົນມີຄວາມມຸ່ງໝັ້ນເພື່ອຊີວິດທີ່ດີຂຶ້ນ ການເຮັດວຽກທີ່ດີຂຶ້ນ ແລະ ໂລກທີ່ສົມບູນ. ALE ແມ່ນສິດທິມະນຸດ”.

ເພື່ອຮັບປະກັນກ່ຽວກັບສິດທິມະນຸດ, ພວກເຮົາຈະຍັງຄົງເຮັດວຽກໃນປະເທດກຳປູເຈຍ, ລາວ ແລະ ໃນພາກພື້ນຕໍ່ໄປ.

ດ້ວຍຄວາມປາຖະໜາດີ, ບໍ່ວ່າຈະຢູ່ໃສຂໍໃຫ້ທຸກຄົນປອດໄພ.

ດ້ວຍຄວາມນັບຖື
*Johann Heilmann*
*ຜູ້ອຳນວຍການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້*

# ເຮັດໃຫ້ການຮຽນຮູ້ຕະຫຼອດຊີວິດມີຄວາມໝາຍໃນ ສປປ ລາວ - DVV International ໄດ້ເຊີນຊ່ຽວຊານຈາກ UIL ແລະ UNESCO ເປັນແຮງຊຸກດັນໃໝ່

*Johann Heilmann,* DVV International

ເລີ່ມແຕ່ ປີ 2016 DVV International ໄດ້ຮ່ວມມືກັບຄູ່ຮ່ວມພັດທະນາ ແລະ ກົມການສຶກສານອກໂຮງຮຽນ (ກສນ), ກະຊວງສຶກສາທິການ ແລະ ກິລາ (ສສກ) ໄດ້ອອກດຳລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ເຊິ່ງເປັນແນວຄວາມຄິດພື້ນຖານຂອງລະບົບການສຶກສາໃນລາວ. ດຳລັດສະບັບນີ້ໄດ້ຮັບການອະນຸມັດຢ່າງເປັນທາງການ ຈາກທ່ານນາຍົກລັດຖະມົນຕີໃນປີ 2020. ການກຳເນີນການໃນປະຈຸບັນນີ້ແມ່ນໄດ້ຮັບການຊຸກຍູ້ຜ່ານກອງປະຊຸມເລີ່ມຕົ້ນ ເຊິ່ງມີຜູ້ເຂົ້າຮ່ວມຈາກສະຖາບັນອຸຍແນດສໂກສຳລັບການຮຽນຮູ້ຕະຫຼອດຊີວິດ (UIL) ແລະຫ້ອງການອຸຍແນດສໂກປະຈຳພາກພື້ນອາຊີ ແລະ ປາຊີຟິກໃຕ້ ໃນທ້າຍເດືອນມີນາ 2021 ທີ່ຜ່ານມາ.

## ນຳໃຊ້ແນວຄວາມຄິດທີ່ເປັນຈິງ

ການພັດທະນາດຳລັດອາດເປັນສິ່ງທີ່ທ້າທາຍ, ການໄດ້ຮັບອະນຸມັດອາດຈະຍາກກວ່າ ຄືທ່ານຕ້ອງການການສະໜັບສະໜູນໃນທາງການເມືອງ. ແຕ່ໃນຄວາມເປັນຈິງ ການຈັດຕັ້ງປະຕິບັດແມ່ນເປັນວຽກທີ່ຍາກທີ່ສຸດ ບໍ່ພຽງແຕ່ຕ້ອງໄດ້ອາໄສຄວາມເຫັນດີເຫັນພ້ອມທາງການເມືອງເທົ່ານັ້ນ ແຕ່ມັນຍັງຕ້ອງໄດ້ມີການພົວພັນກັບພາກສ່ວນກ່ຽວຂ້ອງຫຼາຍພາກສ່ວນ, ດັ່ງໃນກໍລະນີດຳລັດການຮຽນຮູ້ຕະຫຼອດຊີວິດ ກໍຕ້ອງໄດ້ອາໄສພາກສ່ວນອື່ນນອກເໜືອຈາກຂະແໜງການສຶກສາ. ເພື່ອທີ່ຈະຍັງຄົງຜະເຊີນກັບສິ່ງທ້າທາຍນີ້ ດີວີວີ ອິນເຕີເນເຊີນແນວ ແລະ ກົມ ກສນ ໄດ້ເຊີນທ່ານ Alex Howells ແລະ ທ່ານ Raul Valdes ຈາກ UIL ແລະ ທ່ານ Ichiro Miyazawa ຈາກຫ້ອງການອຸຍແນດສໂກປະຈຳພາກພື້ນອາຊີ ແລະ ປາຊີຟິກໃຕ້ ເພື່ອແບ່ງປັນຄວາມຄິດເຫັນຮ່ວມກັບບັນດາພາກສ່ວນກ່ຽວຂ້ອງ ທີ່ຈະນຳເອົາດຳລັດການຮຽນຮູ້ຕະຫຼອດຊີວິດນີ້ໄປຈັດຕັ້ງປະຕິບັດໃນລະບົບການສຶກສາໃນ ສປປ ລາວ.

ໃນຂັ້ນຕອນທຳອິດຂອງກອງປະຊຸມ, ກົມ ກສນ ໄດ້ສະເໜີຄຳຖາມຕໍ່ກັບແຂກອຸຍແນດສໂກ ກ່ຽວກັບການນຳໄປຈັດຕັ້ງປະຕິບັດຕໍ່ ເຊິ່ງແຂກກໍໄດ້ຕອບຄຳຖາມໃນລັກສະນະຂອງ "ການລົງມືປະຕິບັດ". ຜູ້ເຂົ້າຮ່ວມເຫັນດີ ໃນທັນທີວ່າ ເພື່ອໃຫ້ດຳລັດດຳເນີນການໄດ້ສຳເລັດຕາມ ມາດຕະຖານຄວາມເປັນຈິງ ຕ້ອງໄດ້ພູນໃຊ້ງົບປະມານ ແລະ ຊັບພະຍາກອນມະນຸດທີ່ມີຢູ່. ເວົ້າອີກຢ່າງໜຶ່ງວ່າ: ການ ອະນຸມັດດຳລັດນັ້ນບໍ່ໄດ້ມາພ້ອມກັບງົບປະມານ ຫຼື ກຳລັງແຮງງານເພີ່ມຕື່ມ. ໃນທາງກົງກັນຂ້າມ, ການຫຼຸດລົງຂອງລາຍຮັບແຫ່ງຊາດອາດຈະເຮັດໃຫ້ງົບປະມານຫຼຸດລົງໃນອະນາຄົດທີ່ຄາດເດົາໄດ້. ເຖິງຢ່າງໃດກໍຕາມ, ໃນອີກບໍ່ດົນມັນກໍຈະເຫັນໄດ້ຊັດເຈນຂຶ້ນວ່າມີຈຸດເລີ່ມຕົ້ນທີ່ມີແນວໂນ້ມຫຼາຍຢ່າງ ໃນການກຳນົດບູລິມະສິດໃນການຈັດຕັ້ງປະຕິບັດຕາມດຳລັດ.

## ເສັ້ນທາງການຮຽນຮູ້ແບບຢືດຢຸ່ນສຳລັບທຸກຄົນ

ປະເດັນສຳຄັນໃນອີກຢ່າງໜຶ່ງ ໃນດຳລັດສະບັບນີ້ແມ່ນການຍອມຮັບ, ການຢືນຢັນ ແລະ ການຮັບຮູ້ (RVA) ຜົນຂອງການຮຽນຮູ້ກ່ອນໜ້ານີ້. ໃນອີກດ້ານໜຶ່ງ, ມັນຍັງຄົງເປັນອຸປະສັກສຳຄັນ ໃນການຊຶມເຂົ້າໄປໃນລະບົບການສຶກສາໃນ ສປປ ລາວ. ກົມ ກສນ ແລະ ບັນດາຂະແໜງ ກສນ ໃນຂັ້ນແຂວງ, ຂັ້ນເມືອງ ແລະ ໃນຂັ້ນບ້ານບາງເຂດໄດ້ສະໜອງການສຶກສາ ທີ່ຮຽກວ່າ "ໂຄງການຫຼັກສູດທຽບເທົ່າ" ທີ່ຊ່ວຍໃຫ້ປະຊາຊົນທີ່ອອກໂຮງຮຽນກ່ອນກຳນົດ ຫຼື ປະຊາຊົນທີ່ບໍ່ເຄີຍເຂົ້າຮຽນໜັງສື ໄດ້ຮັບໂອກາດໃນການຮຽນຈົບຂັ້ນປະຖົມສຶກສາ ຫຼື ມັດທະຍົມສຶກສາ. ເຖິງຢ່າງໃດກໍຕາມ, ມາຮອດປະຈຸບັນນັກຮຽນທີ່ຈົບໃນສາຍການສຶກສາພາກບຳລຸງກໍຍັງບໍ່ສາມາດເຂົ້າຮຽນຕໍ່ ໃນສາຍການສຶກສາພາກປົກກະຕິໄດ້. ໃນແນວຄວາມຄິດຂອງການຮຽນຮູ້ຕະຫຼອດຊີວິດ ແລະ ການຈັດຕັ້ງປະຕິບັດດຳລັດ, ມັນສຳຄັນຫຼາຍທີ່ຈະຕ້ອງປັບປຸງແປງສິ່ງດັ່ງກ່າວ. ໂດຍທົ່ວໄປ, ການສ້າງເສັ້ນທາງການຮຽນຮູ້ແບບປັບປຸງນຈະມີຄວາມສຳຄັນເພື່ອເພີ່ມການຮຽນຮູ້ແບບຊັດແຈ້ງ (visibility of learning), ການນັບຖືຕົນເອງ ແລະ ແຮງຈູງໃຈຂອງຜູ້ຮຽນ ເພື່ອນຳໄປສູ່ການເປັນຢູ່ທີ່ດີຂຶ້ນ ແລະ ໂອກາດໃນການເຮັດວຽກທີ່ເພີ່ມຂຶ້ນໃນໄລຍະຍາວ.

ສິ່ງສຳຄັນປະການທີສອງ ຂອງດຳລັດການຮຽນຮູ້ຕະຫຼອດຊີວິດຄືການສ້າງຕັ້ງສະຖາບັນການຮຽນຮູ້ຕະຫຼອດຊີວິດ. ເມື່ອພິຈາລະນາເບິ່ງດ້ານງົບປະມານ ແລະ ໂຄງສ້າງທີ່ຈຳກັດ, ນີ້ບໍ່ໄດ້ໝາຍເຖິງການກໍ່ຕັ້ງສະຖາບັນໃໝ່ ແຕ່ແມ່ນການຫັນເອົາປຸງນສະຖາບັນທີ່ມີຢູ່ແລ້ວ ໃຫ້ເປັນສະຖາບັນທີ່ສະໜອງໂອກາດການຮຽນຮູ້ຕະຫຼອດຊີວິດ. ຕົວຢ່າງ: ແນະນຳໃຫ້ມີການພັດທະນາແນວຄວາມຄິດ ທີ່ອະນຸຍາດໃຫ້ໂຮງຮຽນປະຖົມ ແລະ ມັດທະຍົມສຶກສາ ຕະຫຼອດເຖິງສະຖາບັນ ອຸດົມສຶກສາເປັນສະຖານທີ່ສຳລັບປະຊາຊົນທົ່ວໄປນຳໃຊ້ໄດ້ນອກເວລາຮຽນປົກກະຕິ.

ຄຳແນະນຳອັນມີຄ່າອີກປະການໜຶ່ງໃນກອງປະຊຸມແມ່ນການໃຫ້ຄວາມສຳຄັນໃນການ ສະໜັບສະໜູນດ້ານການເມືອງ. ສິ່ງສຳຄັນທີ່ຈະຕ້ອງມີຜູ້ທີ່ມີອຳນາດຕັດສິນໃຈເຂົ້າຮ່ວມ ແລະ



ຊຸກຍູ້ໃຫ້ພວກເຂົາເປັນຕົວແບບ ຂອງການຮຽນຮູ້ຕະຫຼອດຊີວິດເພື່ອໃຫ້ໝັ້ນໃຈວ່າຈະມີການຮັບຮູ້ທີ່ກວ້າງຂຶ້ນໃນຂົງເຂດການເມືອງ. ແລະ ການຄິດຕ່າງເລັກນ້ອຍ ເພື່ອຈະມີໂອກາດໃນການຮ່ວມມືກັບພາກເອກະຊົນ ເຊິ່ງເຮົາກໍບໍ່ຄວນເບິ່ງຂ້າມ. ເປັນຫຍັງຈຶ່ງບໍ່ສ້າງຂໍ້ຕົກລົງລະຫວ່າງ ກົມ ກສນ ແລະ ພາກເອກະຊົນ ເພື່ອຈັດຫາໃຫ້ມີການຝຶກງານ ແລະ ໂອກາດທາງການສຶກສາສໍາລັບນັກຮຽນຂອງ ກສນ?

## ວຽກບ້ານເພື່ອຮັບປະກັນການຈັດຕັ້ງປະຕິບັດ

ລາຍການຂອງຂໍ້ສະເໜີແນະ ແລະ ຄໍາແນະນໍາ ທີ່ພັດທະນາຂຶ້ນມາເພື່ອແລກປ່ຽນລະຫວ່າງ ກົມ ກສນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ, UIL, ອຸຍແນດສໂກ ແລະ ດີວີວີ ອິນເຕີເນເຊິນແນວ ແມ່ນຫຼາຍຂຶ້ນເລື້ອຍໆ ຕະຫຼອດໄລຍະຂອງກອງປະຊຸມ. ເຫັນໄດ້ຢ່າງຊັດເຈນວ່າມີການວາງຮາກ-ຖານທີ່ດີສໍາລັບການພັດທະນາແຜນການຈັດຕັ້ງປະຕິບັດຂອງດໍາລັດ. ດີວີວີ ອິນເຕີເນເຊິນແນວ ຈະຮ່ວມດໍາເນີນການຢ່າງໃກ້ຊິດກັບຂະບວນການນີ້ ເຊິ່ງຈະໄດ້ຮັບການສະໜັບສະໜູນຈາກ UIL ແລະ ອຸຍແນດສໂກ ເຊັ່ນກັນ. ໃນເດືອນພະຈິກນີ້, ແມ່ນມີຄວາມເປັນໄປໄດ້ສູງທີ່ຕົວແທນຈາກ ສປປ ລາວ ຈໍານວນ 8-10 ທ່ານ ຈະເຂົ້າຮ່ວມການຝຶກອົບຮົມອອນໄລ ເປັນເວລາ 3 ອາທິດ ໃນຫົວຂໍ້ການຈັດຕັ້ງປະຕິບັດແນວຄວາມຄິດຂອງການຮຽນຮູ້ຕະຫຼອດຊີວິດ ເຊິ່ງຈັດໂດຍ UIL ແລະ ມະຫາວິທະຍາໄລຊຽງໄຮ (Shanghai Open University) ປະເທດຈີນ.

ກ່ອນໜ້ານັ້ນ, ກອງປະຊຸມໄດ້ກໍານົດຈໍານວນໜ້າວຽກສໍາຄັນສໍາລັບພາກສ່ວນທີ່ກ່ຽວຂ້ອງຂອງລາວ. ໜ້າທີ່ທໍາອິດແມ່ນການແຕ່ງຕັ້ງຄະນະກໍາມາທິການຊີ້ນໍາການຮຽນຮູ້ຕະຫຼອດຊີວິດ ເຊິ່ງຈະເປັນປະທານໂດຍທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ. ຄະນະກໍາມາທິການນີ້ມີໜ້າທີ່ຮັບຜິດຊອບຢ່າງເປັນທາງການກ່ຽວກັບການອະນຸມັດແນວທາງ ແລະ ການຕັດສິນໃຈພາຍໃຕ້ດໍາລັດສະບັບນີ້. ກິດຈະກໍາຕ່າງໆຈະຄຸ້ມຄອງໂດຍກົມ ກສນ ເຊິ່ງມີໜ້າທີ່ເປັນເລຂາທິການຂອງດໍາລັດ.

ໃນບົດກ່າວປິດພິທີຂອງທ່ານຫົວໜ້າພົມພົວພັນສາກົນຂອງກະຊວງ ສສກ ທ່ານ ນາງ ສິລິນທອນ ສັກລໍຄໍາ ໄດ້ເນັ້ນ-ໜັກເຖິງບົດບາດຂອງແນວຄວາມຄິດ ແລະ ຄວາມສໍາຄັນຂອງການສະໜັບສະໜູນຢ່າງຕໍ່ເນື່ອງຈາກ ດີວີວີ ອິນເຕີ-ເນເຊິນແນວ. ສໍາລັບ ດີວີວີ ອິນເຕີເນເຊິນແນວ ການສະໜັບສະໜູນດໍາລັດແມ່ນຍັງເປັນບູລິມະສິດສໍາຄັນໃນແຜນງານການເຮັດວຽກໃນຊຸມປີຕໍ່ໜ້າ.

# ການດຳເນີນວຽກຂອງຜູ້ຮັບຜິດຊອບ ໂຄງການ ເມືອງ ນອງ- ເຊໂປນ

*ດອກຄຳ ຊິມສີຫາປັນຍາ*, DVV International

**ນຳໃຊ້ສູນການຮຽນຮູ້ຊຸມຊົນເປັນຜບ່ອນສ້າງລາຍຮັບສຳລັບແມ່ຍິງ - ນີ້ແມ່ນຈຸດປະສົງຂອງໂຄງການດີວີວີ ອິນເຕີເນເຊິນແນວ ໃຂເມືອງນອງ ແລະ ເຊໂປນ ໃນໄລຍະໃໝ່ ໂຄງການ 3 ປີ ເລີ່ມແຕ່ປີ 2021.**

ດັ່ງນັ້ນ ດີວີວີ ີນເຕີດເນເຊິນແນວ ຈຶ່ງມີຄວາມຕັ້ງໃຈທີ່ຈະເພີ່ມລາຍຮັບໃຫ້ແກ່ແມ່ຍິງໃນ ຢ່າງຕ່ຳ 100 ຄົນ ໃນກຸ່ມບ້ານເປົ້າໝາຍທີ່ໄດ້ຮັບຄັດເລືອກ. ເຊິ່ງຈະເລີ່ມຈາກການສ້າງຂີດຄວາມສາມາດໃນດ້ານຕ່າງໆ ເຊັ່ນ: ດ້ານຫັດຖະກຳ,ໂດຍນຳໃຊ້ວັດສະດຸທຳມະຊາດທີ່ຫາໄດ້ໃນທ້ອງຖິ່ນ, ການຖັກຟອຍ ຫຼື ການລ້ຽງສັດ. ກ່ອນທີ່ຈະເຂົ້າສູ່ທັກສະອື່ນໆ ທີ່ຍາກກວ່າ, ຜູ້ເຂົ້າຮ່ວມທຸກຄົນຈະໄດ້ຝຶກທັກສະຊີວິດ ທີ່ຈະຊ່ວຍໃຫ້ແມ່ຍິງທຸກຄົນພັດທະນາຄວາມໝັ້ນໃຈ ແລະ ຄວາມນັບຖືຕົນເອງຫຼາຍຂຶ້ນ.

ການສຳຫຼວດຂັ້ນພື້ນຖານແມ່ນໄດ້ຈັດຂຶ້ນໃນເດືອນມັງກອນ ເພື່ອເປັຣເຄື່ອມືວັດແທກວ່າມີລາຍຮັບເພີ່ມຂຶ້ນ. ຫຼັງຈາກນັ້ນ ເພື່ອບັນລຸຕາມຈຸດປະສົງຂອງໂຄງການເພີ່ມລາຍຮັບໃຫ້ແມ່ຍິງ ຈະໄດ້ມີການວັດແທກອີກຄັ້ງ ໃນທ້າຍປີ 2023.

ການດຳເນີນການນີ້ໄດ້ຮັບການສະໜັບສະໜູນດ້ານວິຊາການຈາກບ້ານໂພນຊອງ ໃນແຂວງວຽງຈັນ ແລະ ສະມາຄົມພັດທະນາຊົນນະບົດ (RDA). RDA ໄດ້ເລີ່ມຈາກການຝຶກທັກສະສັງຄົມໃຫ້ແກ່ກຸ່ມເປົ້າໝາຍ ແລະ ສ້າງຊ່ອງທາງອອນໄລໃນການເຜີຍແຜ່ສິນຄ້າຫັດຖະກຳກັບກຸ່ມແມ່ຍິງຈາກບ້ານໂພນຊອງ ໂດຍຜ່ານໂຄງການດັ່ງກ່າວ. ຜ່ານໂຄງການນີ້ສະແດງໃຫ້ເຫັນວ່າໂຄງສ້າງຂອງ ລະບົບການສຶກສານອກໂຮງຮຽນ, ບໍ່ວ່າຈະຢູ່ໃນລະດັບຮາກຖານ, ສູນການຮຽນຮູ້ ຊຸມຊົນແມ່ນສາມາດສ້າງຊີວິດການເປັນຢູ່ທີ່ດີຂຶ້ນໄດ້ ແລະ ໃນກໍລະນີນີ້ ໂດຍສະເພາະການສົ່ງເສີມບົດບາດໃຫ້ແກ່ແມ່ຍິງ.

ກິດຈະກຳສ້າງລາຍຮັບເຫຼົ່ານີ້ໄດ້ຮັບການສະໜັບສະໜູນຈາກກະຊວງການຮ່ວມມືທາງເສດຖະກິດ ແລະ ການພັດທະນາຂອງສະຫະພັນເຢຍລະມັນ (BMZ). ກິດຈະກຳຕ່າງໆ ທີ່ວາງແຜນໄວ້ສຳລັບການເປີດສູນການຮຽນຮູ້ຊຸມຊົນ ສຳລັບເດັກນ້ອຍ ແລະ ຊາວໜຸ່ມ ແມ່ນກຳລັງດຳເນີນການ ໂດຍໄດ້ຮັບທຶນສະໜັບສະໜູນຈາກ ກອງທຶນສຳລັບເດັກ (German Kindermissionswerk “Die Sternsinger”).



ຜູ້ບໍລິຫານໂຄງການ
ພັດທະນາສູນການຮຽນຮູ້
ຊຸມຊົນຂອງພວກເຮົາ





ຊ້າຍ: ຝຶກອົບຮົມຫັດຖະກຳ ສຳລັບແມ່ຍິງໃນບ້ານເປົ້າໝາຍ
Right: ກອງປະຊຸມທີ່ຈັດຂຶ້ນໃນສູນການຮຽນຮູ້ຊຸມຊົນຢູ່ເມືອງນອງ



ຜູ້ອຳນວຍການ
ປະຈຳເທດກຳປູເຈຍ

# ຫັນປ່ຽນສູນການຮຽນຮູ້ຊຸມຊົນເປັນ ສູນການຮຽນຮູ້ຕະຫຼອດຊີວິດ ໃນກຳປູເຈຍ

*Vanna Peou*, DVV International

ແນວຄວາມຄິດຂອງສູນການຮຽນຮູ້ຕະຫຼອດຊີວິດ ແມ່ນກ່ຽວກັບການທີ່ມີສະຖານທີ່ສຳລັບຊຸມຊົນ ໃນໝູ່ບ້ານເພື່ອຈຸດປະສົງຕ່າງໆ. ມັນແມ່ນອົງປະກອບທີ່ສຳຄັນຂອງ ນະໂຍບາຍການຮຽນຮູ້ຕະຫຼອດຊີວິດທີ່ໄດ້ອະນຸມັດໃນປີ 2019. ສູນການຮຽນຮູ້ຕະຫຼອດຊີວິດສ້າງຂຶ້ນເພື່ອເປັນສະຖານທີ່ສຳລັບຊຸມຊົນໃນການຮຽນຮູ້, ມ່ວນຊື່ນ ແລະ ຝຶກທັກສະຕ່າງໆ. ຄວາມເປັນເຈົ້າການຂອງຊຸມຊົນແມ່ນຈຸດໃຈກາງຂອງແນວຄວາມຄິດ.

ໃນປະຈຸບັນ, ກຳປູເຈຍມີສູນການຮຽນຮູ້ຊຸມຊົນຫຼາຍກວ່າ 300 ແຫ່ງ, ແຕ່ບໍ່ແມ່ນສູນທັງໝົດຈະເຮັດວຽກໄດ້ດີ. ໃນຫຼາຍກໍລະນີຕ້ອງສ້າງຄວາມອາດສາມາດ ແລະ ທັກສະການຄຸ້ມຄອງໃຫ້ຫຼາຍຂຶ້ນ. ຍິ່ງໄປກວ່ານັ້ນ, ຜູ້ຝຶກສອນ ແລະ ຜູ້ຮຽນຕ້ອງມີອຸປະກອນສຳລັບການຮຽນຮູ້ທີ່ພຽງພໍ.

ແນວຄວາມຄິດສະບັບຮ່າງຂອງສູນການຮຽນຮູ້ຕະຫຼອດຊີວິດ ໄດ້ກະກຽມໃນທ້າຍປີ 2020 ໂດຍ ກະຊວງສຶກສາທິການ, ກິລາ ແລະ ຊາວໜຸ່ມ (MoEYS), ສະບັບສົມບູນຈະຖືກເຜີຍແຜ່ໃນພາຍໆນີ້ໂດຍການສະໜັບສະໜູນຈາກຫ້ອງການ ດີວີວີ ອິນເຕີເນຊັນແນວ. ເຖິງຢ່າງໃດກໍ່ຕາມ, ໂດຍອີງໃສ່ຮ່າງແນວຄວາມຄິດ ທາງຫ້ອງການ ດີວີວີ ອິນເຕີເນຊັນແນວ ປະຈຳປະເທດກຳປູເຈຍ ໄດ້ເລີ່ມຫັນປ່ຽນສູນການຮຽນຮູ້ຊຸມຊົນ 5 ສູນ ໃຫ້ກາຍເປັນສູນການຮຽນຮູ້ຕະຫຼອດຊີວິດ ຕົວແບບ ຈົນເຖິງທ້າຍປີ 2023. ໃນປີ 2021, ສູນການຮຽນຮູ້ຊຸມຊົນ 5 ແຫ່ງ ກຳລັງຈັດຕັ້ງປະຕິບັດ 2 ກິດຈະກຳຫຼັກ. ນອກຈາກນັ້ນ, ຫ້ອງທົດລອງຄອມພິວເຕີໄດ້ຖືກກໍ່ຕັ້ງຂຶ້ນໃນ 5 ສູນການຮຽນຮູ້ຊຸມຊົນ ແລະ ຫຼັກສູດໄລຍະສັ້ນກ່ຽວກັບວິທີການນຳໃຊ້ຄອມພິວເຕີ ແລະ ສື່ສັງຄົມອອນໄລ ເຊັ່ນ: ໂທລະເລກ (Telegram), ເຟຊບຸກ (Facebook), ສະໄກ໌ (Skype) ແລະ ອີເມວ (emails) ໂດຍນຳໃຊ້ໂປຣແກຣມຊູມ (zoom) ເພື່ອຝຶກອົບຮົມສຳລັບສະມາຊິກສູນການຮຽນຮູ້ຊຸມຊົນທຸກຄົນ. ກິດຈະກຳການສ້າງລາຍຮັບ ທີ່ເລີ່ມຕົ້ນຈາກກະສິກຳຂະໜາດນ້ອຍຈະຖືກນຳສະເໜີຕໍ່ຜູ້ບໍລິຫານສູນການຮຽນຮູ້ຊຸມຊົນໂດຍຜ່ານວິດີໂອສາທິດຕົວຈິງ.

ຫຼັງຈາກນັ້ນ 2-3 ເດືອນ ພວກເຮົາເຫັນໄດ້ຄວາມແຕກຕ່າງ. ປະຈຸບັນນີ້ສະພາບແວດລ້ອມຂອງ 5 ສູນການຮຽນຮູ້ຊຸມຊົນແມ່ນມີສີຂຽວອ້ອມຮອບ , ສະອາດ ແລະ ສົດຊື່ນຕາ. ຄະນະກຳມາທິການບໍລິຫານສູນການຮຽນຮູ້ຊຸມຊົນ ຮູ້ສຶກຂອບໃຈ ເພາະວ່າພວກເຂົາເຈົ້າສາມາດນຳໃຊ້ສື່ສັງຄົມອອນໄລໃນການຕິດຕໍ່ກັບເຄືອຂ່າຍຂອງພວກເຂົາເຈົ້າ ແລະ ພວກເຂົາດີໃຈທີ່ຊຸມຊົນຂອງພວກເຂົານັ້ນ ໄດ້ຮັບຮູ້ວ່າສູນມີບໍລິການຫຼາຍຮູບແບບ ແລະ ບໍ່ພຽງແຕ່ການສຶກສາເທົ່ານັ້ນ ແຕ່ຍັງສະໜອງ ຜັກໃຫ້ພະສົງ ແລະ ຊາວບ້ານ ຈາກສວນຂອງສູນການຮຽນຮູ້ຊຸມຊົນ.

ໃນອະນາຄົດ, ພວກເຮົາຢາກເຫັນສູນການຮຽນຮູ້ຕະຫຼອດຊີວິດບໍ່ພຽງແຕ່ເວົ້າເຖິງການເຂົ້າເຖິງຫ້ອງຮຽນ, ແຕ່ຍັງກ່ຽວກັບການສົ່ງເສີມການສຶກສາສຳລັບຄົນທີ່ປະລະການຮຽນໃນຊຸມຊົນ, ໄວໜຸ່ມ ແລະ ຜູ້ໃຫຍ່ຜູ້ທີ່ຕ້ອງການສ້າງທັກສະການສ້າງເຄືອຂ່າຍ, ການເຂົ້າສັງຄົມ ແລະ ສົນທະນາກ່ຽວກັບບັນຫາຕ່າງໆ ກັບໝູ່ເພື່ອນຈາກພາຍນອກຊຸມຊົນໂດຍການໃຊ້ຄອມພິວເຕີ ແລະ ສູນການຮຽນຮູ້ຕະຫຼອດຊີວິດເພື່ອເປັນເວທີແລກປ່ຽນໃນຫຼາຍໆດ້ານ. ເພື່ອເປັນການສ້າງລາຍໄດ້ ຄວນໝູນໃຊ້ເຄື່ອງມືອອນໄລ ເພື່ອຂາຍຜະລິດຕະພັນໃນໝູ່ບ້ານ.







# ການປັບປ່ຽນເພື່ອຄວາມຍືນຍົງຂອງ ASPBAE ໃນທ່າມກາງຄວາມທ້າທາຍຂອງການແຜ່ລະບາດ ຂອງໂຄວິດ-19 ເພື່ອກ້າວໄປສູ່ວາລະການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່

*Helen Dabu*, ASPBAE



ທ່ານເລຂາທິການ ຂອງສະມາຄົມ ASPBAE

ເປັນເວລາກວ່າໜຶ່ງປີ ນັບແຕ່ມີການລະບາດຂອງ ພະຍາດໂຄວິດ-19, ບັນດາປະເທດໃນທົ່ວໂລກຍັງສືບຕໍ່ປະສົບກັບຜົນກະທົບຫຼາຍດ້ານ ແລະ ໃນຫຼາຍຂັ້ນຂອງການແຜ່ລະບາດຂອງພະຍາດດັ່ງກ່າວ, ໃນທົ່ວສັງຄົມ ລວມທັງເສດຖະກິດ ແລະ ການເມືອງ.

ໃນໄລຍະເລີ່ມຕົ້ນຂອງການລະບາດໃຫຍ່ ສະມາຄົມອາຊີ-ປາຊີຟິກໃຕ້ເພື່ອການສຶກສາຂັ້ນພື້ນຖານ ແລະ ການສຶກສາຜູ້ໃຫຍ່ (ASPBAE), ໃນຖານະເປັນຄູ່ຮ່ວມພັດທະນາລະດັບພາກພື້ນຂອງ ດີວີວີ ອິນເຕີເນເຊິນແນວ ໄດ້ໂຕ້ຕອບຄວາມທ້າທາຍດັ່ງກ່າວ ໂດຍການປັບປ່ຽນຂະບວນການ ແລະ ວິທີການທີ່ ASPBAE ໄດ້ນຳໃຊ້ເພື່ອບັນລຸເປົ້າໝາຍໃນປີ 2020. ສະມາຄົມຍັງຄົງດຳເນີນການຕາມແນວທາງທີ່ຄ່ອງຕົວ ແລະ ສາມາດປັບຕົວໄດ້ ແລະ ໃນການວາງແຜນສຳລັບປີ 2021 ໂດຍການປຶກສາຫາລືກັບສະມາຊິກ ແລະ ຄູ່ຮ່ວມພັດທະນາ ເຊິ່ງເປັນສ່ວນໜຶ່ງ ຂອງຂະບວນການວາງແຜນຍຸດທະສາດຂອງ ASPBAE ໃນອີກ 4 ປີຕໍ່ໜ້າ 2021-2024.

ການຮັບຮູ້ເຖິງຄວາມທ້າທາຍຢ່າງຕໍ່ເນື່ອງ ທີ່ເກີດຈາກການລະບາດໃຫຍ່ຂອງ ໂຄວິດ-19 ໃນການເຮັດວຽກ, ການປັບ-ປ່ຽນວິທີການຈັດຕັ້ງປະຕິບັດໄດ້ຖືກນຳໃຊ້ໂດຍ ASPBAE ລວມທັງການປັບປ່ຽນກິດຈະກຳໃນລະດັບພາກພື້ນ ເປັນແບບຄ້າຍຄືເຫັນໜ້າກັນ ໃຫ້ເປັນແບບປະສົມປະສານ (ການລວມເອົາກິດຈະກຳຄ້າຍຄືເຫັນໜ້າ ແລະ ການພົບປະແບບເຫັນໜ້າແທ້ໃນລະດັບປະເທດ) ແລະ ຢູ່ໃນຮູບແບບການມີສ່ວນຮ່ວມ. ເຊິ່ງຄາດວ່າຈະເປັນວິທີການມີສ່ວນຮ່ວມທີ່ສຳຄັນພາຍໃນປີ 2021 ໃນຂະນະທີ່ ASPBAE ຕິດຕາມອັດຕາການເລີ່ມສັກວັກຊີນ ຂອງບັນດາປະເທດໃນພາກພື້ນ ເພື່ອຈະນຳມາພິຈາລະນາວ່າ ຈະສາມາດຈັດກິດຈະກຳ ແລະ ກອງປະຊຸມໃນລະດັບພາກພື້ນ ຫຼື ອະນຸພາກພື້ນ ໄດ້ຫຼືບໍ່ໃນທ້າຍປີ.

ນອກນັ້ນ, ການວາງແຜນວຽກແລະການນຳໃຊ້ຊັບພະຍາກອນໃນປີ 2021, ASPBAE ໄດ້ຂະຫຍາຍຂອບເຂດວຽກງານ ແລະ ການດຳເນີນງານໃນລະດັບພາກພື້ນຢ່າງມີໄນຍະສຳຄັນ. ໂດຍສະເພາະ ASPBAE ໄດ້ຂະຫຍາຍການສະໜັບສະໜູນໃນລະດັບປະເທດ ແລະ ການສ້າງຂີດຄວາມສາມາດໃຫ້ບັນດາປະເທດສະມາຊິກ ໃຫ້ມີຄວາມຢືດຢຸ່ນໃນການເຮັດວຽກໃນລະດັບຊາດ ແລະ ລະດັບທ້ອງຖິ່ນຫຼາຍຂຶ້ນ, ເປັນການຕອບໂຕ້ຕໍ່ກັບຜົນກະທົບຂອງການແຜ່ລະບາດຂອງ ໂຄວິດ-19 ທີ່ມີຕໍ່ການສຶກສາໃນວົງກວ້າງ ແລະ ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ ທີ່ສະເພາະເຈາະຈົງຂຶ້ນຕື່ມ.

ໃນຂະນະທີ່ປະເທດ ແລະ ລະດັບຊຸມຊົນທີ່ກ່ຽວຂ້ອງກັບການຮຽນຮູ້ ແລະ ສຶກສາຜູ້ໃຫຍ່ ເຫຼົ່ານີ້ດຳເນີນການຮ່ວມກັບສະມາຊິກຂອງ ASPBAE ໃນພາກພື້ນອາຊີ-ປາຊີຟິກ, ASPBAE ຈະເພີ່ມປະສິດທິພາບໃນການເຈລະຈາໃນລະດັບໂລກ, ລະດັບພາກພື້ນ ແລະ ລະດັບປະເທດ ທີ່ກຳລັງຈະເກີດຂຶ້ນຢ່າງເຕັມທີ່. ໃນເວລາດຽວກັນ ASPBAE ຈະຍັງຄົງຜະລິດຜົນງານການວິເຄາະທີ່ເປັນລາຍລັກອັກສອນທີ່ສົ່ງເສີ,ວາລະຂອງວຽກງານການສຶກສາຂອງຊາວໜຸ່ມ ແລະ ALE.

ດ້ວຍຂໍ້ຈຳກັດດ້ານການເຄື່ອນໄຫວຢ່າງຕໍ່ເນື່ອງ ທີ່ເກີດຈາກການລະບາດຂອງ ໂຄວິດ-19, ພື້ນທີ່ການສະໜັບສະໜູນໃນລະດັບໂລກ, ລະດັບພາກພື້ນ ແລະ ບາງປະເທດ ໄດ້ຖືກປັບໃຫ້ເຂົ້າກັບຮູບແບບການມີສ່ວນຮ່ວມອອນໄລ. ສິ່ງນີ້ໄດ້ຮຽກຮ້ອງໃຫ້ ASPBAE ແກ້ໄຂແນວທາງການສະໜັບສະໜູນເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງນະໂຍບາຍໃໝ່ ທີ່ມີແຮງຂັບເຄື່ອນດ້ານນະໂຍບາຍຫຼາຍຂຶ້ນ.



ກຸ່ມຜູ້ເຂົ້າຮ່ວມຈາກ ປະເທດຟີລິບປິນ ໃນກອງປະຊຸມກ່ຽວກັບ ການກະກຽມສື່ສຳລັບ ການຝຶກອົບຮົມ

ASPBAE ພົບວ່າຕ້ອງດໍາເນີນການໃຫ້ໄວຂຶ້ນ ຄືຕ້ອງປັບໂຕຕາມເຂດເວລາຂອງທົ່ວໂລກໃນຫຼາຍລະບົບ, ມີຍຸດທະສາດຫຼາຍຂຶ້ນ ເພື່ອຢັ້ງຢືນທີ່ຕັ້ງຕໍາແໜ່ງຂອງອົງການຈັດຕັ້ງທາງສັງຄົມ (CSO) ແລະ ຮັກສາພື້ນທີ່ຂອງ CSO ໃນເວທີການສະໜັບສະໜູນ ໂດຍສະເພາະ ເລີ່ມແຕ່ການມີພື້ນທີ່ແຄບລົງໃນຮູບການທີ່ເກືອບຄືຂອງແທ້ ແລະ ຮູບແບບການເຮັດວຽກທີ່ປ່ຽນໄປ.

ຮູບແບບການມີສ່ວນຮ່ວມທີ່ເກືອບຄືຂອງແທ້ ແລະ ປະສົມປະສານເຫຼົ່ານີ້ ຈະຕ້ອງປັບປຸງຄືນໃໝ່ ຂອງວິທີການສ້າງຄວາມອາດສາມາດ, ຮູບແບບຂອງການຝຶກອົບຮົມ, ການອໍານວຍຄວາມສະດວກ ແລະ ການຮຽນຮູ້. ASPBAE ຈະຮັບປະກັນປະສົບການ ແລະ ທັກສະທີ່ຈໍາເປັນຕ້ອງໄດ້ຮັບການຝຶກຝົນພາຍໃນອົງກອນ ເພື່ອໃຫ້ມີປະສິດທິພາບ ແລະ ມີຄວາມໝາຍໃນປະເທດພາກພື້ນທີ່ມີການແຂ່ງຂັນກັນສູງຂຶ້ນ ແລະ ລວມທັງການໂຕ້ແຍ້ງ ຄວບຄູ່ໄປກັບການຫລຸດຊ່ອງຫວ່າງທາງດ້ານປະຊາທິປະໄຕໃນພາກພື້ນອາຊີ-ປາຊີຟິກ.

ຜົນງານຂອງການພັດທະນາສະແບບຍືນຍົງ ເປົ້າໝາຍ 4 (SDG4) ໃນທົ່ວໂລກກໍາລັງຖືກທົບທວນຄືນ, ໃນຂະນະທີ່ພື້ນທີ່ການສຶກສາທີ່ສໍາຄັນທົ່ວໂລກ ແລະ ເວທີອື່ນໆ ກໍາລັງມີອິດທິພົນເພີ່ມຂຶ້ນໃນແງ່ຂອງຄວາມກ້າວໜ້າ ແລະ ໃນບາງກໍລະນີ, ໃນວາລະ ສໍາລັບການສຶກສາທີ່ແຄບເຂົ້າ ແລະ ການກໍານົດຄວາມໝາຍຂອງສິດທິໃນການສຶກສາແລະ ການຮຽນຮູ້ຕະຫຼອດຊີວິດ.

ASPBAE ມຸ່ງໝັ້ນທີ່ນະຮັກສາຄວາມຍືດຢຸ່ນ ແລະ ຕໍາແໜ່ງທີ່ແຂງແກ່ນນີ້ ເພື່ອນໍາທາງພື້ນທີ່ເຫຼົ່ານີ້ ຢ່າງມີປະສິດທິພາບ ແລະ ໃຊ້ອິດທິພົນທີ່ມີໃນລະດັບໂລກ ແລະ ໃນລະດັບພາກພື້ນ ເຊັ່ນ: SDGs-SDG4 ແລະ ຂະບວນການຂອງກອງປະຊຸມ CONFINTEA VII, ເພື່ອກ້າວໄປສູ່ຮູບແບບການພັດທະນາການສຶກສາທີ່ຍືນຍົງ ແລະ ມີຄວາມຍືດຢຸ່ນຫຼາຍຂຶ້ນ ເຊິ່ງມັນກ່ຽວຂ້ອງກັບການຮັບປະກັນການຮຽນການສອນສໍາລັບການສຶກສາຂັ້ນພື້ນຖານ, ຊາວໜຸ່ມ ແລະ ALE.

ເພື່ອເປັນການດໍາເນີນການເພີ່ມເຕີມ ສໍາລັບການປັບຕົວໃນໄລຍະການແຜ່ລະບາດ, ASPBAE ວາງແຜນທີ່ຈະເລີ່ມຂະບວນການພັດທະນາອົງກອນ ໃນປີ 2021 ເຊິ່ງລວມເຖິງການພັດທະນາບໍລິບົດທີ່ສໍາຄັນໃນວຽກງານທີ່ກໍາລັງດໍາເນີນ ແລະ ການວິເຄາະ ແລະ ການວາງຍຸດທະສາດທີ່ເລິກເຊິ່ງກວ່າເກົ່າ ເພື່ອຕອບສະໜອງຕໍ່ການປ່ຽນແປງ ແລະ ການເຄື່ອນໄຫວຕາມບໍລິບົດ. ຜ່ານຂະບວນການນີ້, ASPBAE ມີຈຸດປະສົງເພື່ອປົກປ້ອງພື້ນທີ່ຂອງຕົນ ໃນຖານະທີ່ເປັນສະມາຄົມທີ່ເຄື່ອນໄຫວກ່ຽວກັບ ການສຶກສາໃນລະດັບພາກ-ພື້ນທີ່ມີຄວາມຍືດຢຸ່ນ ແລະ ຍືນຍົງ ສາມາດເຮັດວຽກຮ່ວມກັບສະມາຊິກ ແລະ ຄູ່ຮ່ວມພັດທະນາ ເພື່ອປົກປ້ອງສິດໃນການສຶກສາ ແລະ ວາລະການຮຽນຮູ້ຕະຫຼອດຊີວິດ.

ຮູບ:ກອງປະຊຸມອອນໄລຂອງສະພາບໍລິຫານ ASPBAE ແລະ ກອງປະຊຸມພະນັກງານ



# ແຄມເປນ "We-Are-ALE" ໄດ້ເລີ່ມຂຶ້ນແລ້ວ

ໃນວັນທີ 22 ມີນາ 2021 ຜູ້ເຂົ້າຮ່ວມ 375 ຄົນ ຈາກທົ່ວໂລກ ໄດ້ພົບກັນຢູ່ໃນເວທີສົນທະນາທີ່ເໝືອນຈິງ ສໍາລັບກິດຈະກໍາເປີດໂຕຂອງ ຂອງແຄມເປນ (ສື່ໂຄສະນາ) ການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່ (ALE). ຄໍາຂວັນ (Tagline) "We are ALE" (ພວກເຮົາແມ່ນການຮຽນຮູ້ ແລະ ການສຶກສາຜູ້ໃຫຍ່) ໄດ້ຖືກນໍາສະເໜີ, ໃນຄັ້ງທໍາອິດ, ພັນທະມິດທີ່ເປີດກວ້າງຂອງຄູ່ຮ່ວມພັດທະນາ ALE (ເຄືອຂ່າຍ, ສະມາຄົມ ແລະ ອົງກອນ) ໂດຍມີຈຸດປະສົງເພື່ອໃຫ້ການຮຽນຮູ້ ແລະ ແລະ ການສຶກສາຜູ້ໃຫຍ່ ໃຫ້ມີເປັນຍອມຮັບ, ເຂົ້າໃຈ ແລະ ມີຄຸນຄ່າ.

ແຄມເປນຂອງ ALE ເປັນການຮຽກຮ້ອງໃຫ້ມີການເຄື່ອນໄຫວເພື່ອເຮັດໃຫ້ ALE ມີຕົວຕົນທີ່ສາມາດເບິ່ງເຫັນໄດ້ ແລະ ມີຄຸນຄ່າ ໃນຖານະທີ່ເປັນສ່ວນສໍາຄັນຂອງວາລະການຮຽນຮູ້ຕະຫຼອດຊີວິດ ແລະ ເປັນອົງປະກອບສໍາຄັນໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ. ໃນນີ້ ລວມທັງສາມເສົາຫຼັກຂອງທັກສະການຮຽນຮູ້ ແລະ ທັກສະ ໄດ້ແກ່: ທັກສະການຮູ້ໜັງສື ແລະ ທັກສະຂັ້ນພື້ນຖານ, ການສຶກສາຕໍ່ເນື່ອງ ແລະ ທັກສະວິຊາຊີບ ຕະຫຼອດເຖິງເສລີນິຍົມ, ເປັນທີ່ນິຍົມ, ການສຶກສາໃນຊຸມຊົນ ແລະ ທັກສະການເປັນພົນລະເມືອງ ສໍາລັບຊາວໜຸ່ມ ແລະ ຜູ້ໃຫຍ່ລວມໄປເຖິງຜູ້ສູງອາຍຸ.

ສະພາສາກົນເພື່ອການສຶກສາຜູ້ໃຫຍ່ (ICAE) ຮຽກຮ້ອງໃຫ້ບັນດາຜູ້ສະໜັບສະໜູນ ALE, ບັນດາອົງການຈັດຕັ້ງ ແລະ ຜູ້ປະຕິບັດງານທົ່ວໂລກ ເພື່ອເຂົ້າຮ່ວມແຄມເປນ 5 ປີ ຂອງການປະຕິບັດງານລະດັບໂລກນີ້ ເພື່ອໃຫ້ວຽກງານຂອງພວກເຮົາ ໃນຖານະນັກການສຶກສາຜູ້ໃຫຍ່ ແລະ ຜູ້ຮຽນ ຂອງພວກເຮົາ ສາມາດເຫັນໄດ້ ແລະ ເພີ່ມທະວີການມີສ່ວນຮ່ວມ ແລະ ການລົງທຶນຈາກພາກລັດຖະບານ, ຜູ້ບໍລິຈາກ, ພາກເອກະຊົນ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນການເຄື່ອນໄຫວຕ່າງໆໃນສັງຄົມ.

ມັນຮອດເວລາແລ້ວ, ວິກິດການຂອງໄລຍະປະຈຸບັນສະແດງໃຫ້ເຫັນວ່າມີຄວາມສ່ຽງຫຼາຍຢ່າງ ຖ້າຫາກວ່າ ALE ບໍ່ເປັນທີ່ຮູ້ຈັກໃນວົງກວ້າງ ແລະ ບໍ່ເຫັນວ່າເປັນພື້ນທີ່ສໍາຄັນສໍາລັບການລົງທຶນຢ່າງຕໍ່ເນື່ອງ ເຖິງວ່າປະຊາກອນຜູ້ໃຫຍ່ຈະໄດ້ຮັບຜົນກະທົບຈາກການລະບາດໃຫຍ່ຂອງ ໂຄວິດ-19 ແລະ ເຕັກໂນໂລຊີທີ່ກ້າວເຂົ້າມາພ້ອມກັນກັບ ການປ່ຽນແປງຂອງວິຖີການດໍາລົງຊີວິດ, ການເຮັດວຽກ ແລະ ການເຂົ້າສັງຄົມຂອງພວກເຮົາ. ທັງໝົດນີ້ເກີດຂຶ້ນພາຍໃນບໍລິບົດຂອງຄວາມບໍ່ແນ່ນອນທີ່ນັບມື້ນັບເພີ່ມຂຶ້ນ ແລະ ເພີ່ມຄວາມຕຶງຄຽດ ເປັນຕົ້ນແມ່ນດ້ານເຊື້ອຊາດ, ເພດ ແລະ ການປົກຄອງ. ຜູ້ໃຫຍ່ຈະຕ້ອງຮຽນຮູ້ວິທີໃນການໃຊ້ຊີວິດ, ການເຮັດວຽກ ແລະ ການເປັນຢູ່. ເມື່ອເຖິງຕອນນັ້ນ ພວກເຮົາຈຶ່ງຄິດເພື່ອຈະບັນລຸອະນາຄົດທີ່ຍືນຍົງໄດ້.

ເຂົ້າຮ່ວມກັບເປັນ ALE ກັບພວກເຮົາ ໃນຂະນະທີ່ພວກເຮົາຮ່ວມກັນເພື່ອຄວາມຖືກຕ້ອງເປັນທໍາ, ສະຫວັດດີພາບ ແລະ ການປ່ຽນແປງ!



# ທັກສະທີ່ເຮົາຈະຕ້ອງຮຽນຮູ້ໃນຍຸກດິຈິຕອລ

*ດາລຸນີ ສີສຸລາດ*, DVV International



ຜູ້ບໍລິຫານ ການສື່ສານປະຈຳຫ້ອງການ

ທັກສະ ແລະ ອາຊີບທີ່ມີຄວາມຕ້ອງການສູງໃນປະຈຸບັນ ແລະ ອະນາຄົດ ແລະ ການກຽມພ້ອມໃນສາຍອາຊີບ ທີ່ກົງກັບຄວາມຕ້ອງການຂອງຕະຫຼາດແຮງງານໃນຍຸກດິຈິຕອລ, ພື້ນຖານການສ້າງທັກສະໃໝ່ ແລະ ການເພີ່ມທັກສະແຍກໄດ້ເປັນສອງຢ່າງທີ່ສຳຄັນ ໄດ້ແກ່ ຊ໊ອບສະກິວ (Soft Skills) ເພື່ອເປັນການກຽມພ້ອມສຳລັບຕະຫຼາດແຮງງານໃນອະນາຄົດທີ່ຕ້ອງການ ບຸກຄະລາກອນມີປະສົບການທີ່ສາມາດຄິດໄດ້ຮອບດ້ານ, ເຮັດຫຍັງເພື່ອໃຜ ຕອນໃດ ເຊິ່ງທັກສະ ເຫຼົ່ານີ້ຈະສາມາດນຳໄປໃຊ້ໃນການເຮັດວຽກໄດ້ທຸກ ຂະແໜງການ, ມີຄວາມສາມາດຮຽນຮູ້ດ້ານເຕັກໂນໂລຊີ ສາມາດນຳທັນ ແລະ ໃຊ້ເຕັກໂນໂລຊີເຂົ້າໃນການເຮັດວຽກໃຫ້ເກີດປະໂຫຍດ ແລະ ສອດຄ່ອງກັບການຮຽນຮູ້ຕະຫຼອດຊີວິດ ແລະ ມີຄວາມເປັນເຈົ້າການຮູ້ຈັກຈັດສັນຊັບພະຍາກອນ ແລະ ນຳໃຊ້ໃຫ້ເກີດປະໂຫຍດສູງສຸດ.

ໃນບາງຂະແໜງການ ແມ່ນໄດ້ເຊີນຊ່ຽວຊານຈາກຕ່າງປະເທດມາຊ່ວຍ ເຊິ່ງສະແດງໃຫ້ເຫັນວ່າ ເຮົາຍັງຂາດບຸກຄະລາກອນທີ່ມີຄວາມຊ່ຽວຊານ ສະນັ້ນ, ເຮົາຄວນເອົາໃຈໃສ່ຝຶກຝົນໃນສະເພາະດ້ານ ເພື່ອທີ່ຈະສາມາດທຽບ-ເທົ່າສາກົນໄດ້. ຕົວຢ່າງ: ທຸລະກິດການຕະຫຼາດອອນໄລຍັງຂາດແຄນບຸກຄະລາກອນໃນຂະບວນການບໍລິຫານ, ການດຳເນີນງານ ແລະ ການຕະຫຼາດອອນໄລ ແລະ ອີກທັກສະໜຶ່ງທີ່ສຳຄັນກໍຄືທັກສະ ການນຳເອົາຄວາມຮູ້ຄວາມສາມາດມາປັບໃຊ້ໃນການເຮັດວຽກ.

ທັກສະທີ່ຕະຫຼາດຕ້ອງການໃນຍຸກດິຈິຕອລຕ້ອງເລີ່ມເບິ່ງຈາກມຸມມອງ ຄວາມຕ້ອງການຂອງຕະຫຼາດ ແລ້ວຈຶ່ງທົບທວນຄືນວ່າເຮົາຄວນມີການຈັດການສຶກສາແນວໃດ ເພື່ອໃຫ້ກົງກັບຄວາມຕ້ອງການຂອງຕະຫຼາດ ໃນປະຈຸບັນ. ປະຈຸບັນນີ້, ການເຂົ້າມາຂອງດິຈິຕອລ ແລະ ສະຖານະການໂຄວິດ-19 ສົ່ງຜົນກະທົບຕໍ່ຮູບແບບການເຮັດວຽກຂອງຄົນນຳໄປສູ່ຄວາມຈຳເປັນ ທີ່ເຮົາຈະຕ້ອງໃຫ້ຄວາມສົນໃຈ ໃນການພັດທະນາທັກສະຕ່າງໆ ເພື່ອໃຫ້ເຮົາສາມາດປັບໂຕ ແລະ ຮັບມືກັບໂລກ ທີ່ມີການປ່ຽນແປງ.



ຜູ້ເຂົ້າຮ່ວມນຳໃຊ້ ເຄື່ອງມືອອນໄລໃນການ ປະເມີນຜົນພາຍຫຼັງ ການຝຶກອົບຮົມ

ການເລີ່ມຕົ້ນໃນການຮຽນຮູ້ຈາກການປູກຝັງ ແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດ ນັ້ນສຳຄັນຄວບຄູ່ໄປກັບການສ້າງທັກສະໃໝ່ ແລະ ການເພີ່ມທັກສະໄປພ້ອມກັນ. ການຮຽນ-ການສອນ ບໍ່ແມ່ນພຽງແຕ່ໃນຫ້ອງຮຽນ ແຕ່ຈຳເປັນຕ້ອງມີກົນໄກເພື່ອໃຫ້ນັກຮຽນ ສາມາດເລືອກຮຽນເນື້ອຫາທີ່ເຂົາເຈົ້າສົນໃຈ ແລະ ມີໂອກາດໄດ້ຮຽນຜ່ານອິນເຕີເນັດໄດ້. ທັກສະການຄິດວິເຄາະເປັນທັກສະທີ່ສຳຄັນໃນການຮຽນ-ການສອນ ຈະຕ້ອງເນັ້ນໜັກໃສ່ວິທີການສອນໂດຍຜ່ານປະສົບການສຳລັບນັກຮຽນ.

ຄວາມຮູ້ບາງຢ່າງໃນອະດີດ ນັ້ນບໍ່ສາມາດນຳມາໃຊ້ໃນປະຈຸບັນ ໄດ້ແຕ່ ເຮົາກໍສາມາດໝູນໃຊ້ໃຫ້ເກີດປະໂຫຍດໄດ້ເຊັ່ນ: ເມື່ອກ່ອນການຕັດຕໍ່ວີດີໂອແມ່ນເຮົາໃຊ້ໂປຣແກຣມຄອມພິວເຕີ ແຕ່ປະຈຸບັນເຮົາສາມາດໃຊ້ການ ຕັດຕໍ່ວີດີໂອອອນໄລໄດ້ ເຊິ່ງມັນອາດເປັນສິ່ງໃໝ່ ແຕ່ເຄື່ອງມືໃນການຕັດຕໍ່ແມ່ນເຮົາສາມາດໝູນໃຊ້ໄດ້. ທີ່ຜ່ານມາສະຖາບັນການສຶກສາເປັນບ່ອນເຜີຍແຜ່ຄວາມຮູ້ ແຕ່ປະຈຸບັນເຮົາສາມາດໃຊ້ສື່ອອນໄລ ແລະ ອິນເຕີເນັດ ເປັນແຫຼ່ງການຮຽນຮູ້ໄດ້ ບໍ່ວ່າຈະຜ່ານໂທລະສັບມືຖື ຫຼື ຄອມພິວເຕີ, ຄົນລຸ້ນຕໍ່ໄປຈະຕ້ອງມີທັກສະການຮຽນຮູ້ຕະຫຼອດຊີວິດ ເພື່ອສາມາດປັບໂຕເຂົ້າກັບສັງຄົມທີ່ມີການປ່ຽນແປງຕະຫຼອດເວລາ ເຮົາຕ້ອງໄດ້ສະແຫວງຫາຄວາມຮູ້ໃໝ່ໆເພື່ອທີ່ຈະສາມາດທັນເຫດການໃນ ປະຈຸບັນ ແລະ ກຽມພ້ອມເພື່ອອະນາຄົດ ແລະ ຮູ້ຈັກປັບໂຕຢູ່ຕະຫຼອດເວລາ. ການຕັ້ງຄຳຖາມ, ການສືບຄົ້ນການເຂົ້າເຖິງຂໍ້ມູນການຄິດຕ່າງໆ ແລະ ການວິເຄາະຂໍ້ມູນຈຶ່ງເປັນທັກສະທີ່ສຳຄັນໃນຍຸກປະຈຸບັນ, ທັກສະການຮຽນຮູ້ຕະຫຼອດຊີວິດມີຄວາມສຳຄັນຫຼາຍເນື່ອງຈາກຄົນທີ່ຮຽນຈົບ ແລ້ວມັກຈະຢຸດພັດທະນາຕົນເອງ ຂໍ້ມູນຂ່າວສານຕ່າງໆ ຈຶ່ງບໍ່ໄດ້ອັບເດດ ເຮັດໃຫ້ກາຍເປັນຄວາມຮູ້ທີ່ຫຼ້າຫຼັງ ແລະ ໃຊ້ບໍ່ໄດ້ໃນປະຈຸບັນ.

ເຖິງແມ່ນວ່າທັກສະວິຊາການ ວິຊາຊີບເປັນຄວາມຮູ້ທີ່ຈຳເປັນ ແຕ່ຊ໊ອບສະກິລກໍເປັນອີກໜຶ່ງສິ່ງທີ່ຈຳເປັນ ແລະ ຕ້ອງມີການສອນຄວບຄູ່ກັນ ໂດຍໜຶ່ງໃນທັກສະທີ່ສຳຄັນກໍຄືທັກສະການຄິດວິເຄາະ ນອກຈາກນີ້ຍັງມີ ທັກສະສຳຄັນອື່ນໆ ເຊັ່ນ: ທັກສະການວິເຄາະ, ທັກສະຄວາມເປັນຜູ້ນຳ ແລະ ທັກສະການສື່ສານ ແລະ ໃນສ່ວນຂອງທັກສະວິຊາຊີບ ເຊິ່ງເຊື່ອວ່າແຕ່ລະສະຖາບັນແມ່ນກຽມຄວາມພ້ອມຢູ່ແລ້ວ. ນອກນັ້ນ, ການເຫັນຄຸນຄ່າຕົນເອງ ແລະ ມີຄວາມເຊື່ອໝັ້ນໃນຄວາມສາມາດຂອງຕົນເອງແມ່ນສິ່ງສຳຄັນຍິ່ງ, ການຮູ້ສ້າງມູນຄ່າເພີ່ມ ໂດຍນຳເອົາຊັບພະຍາກອນທີ່ມີຢູ່ມາເພີ່ມມູນຄ່າໄດ້, ທັກສະອ້ອມຕົວຮູ້ຈັກການເບິ່ງພາບລວມ ແລະ ເຂົ້າໃຈອົງປະກອບທັງໝົດ, ທັກສະການຄິດມີແຜນລ່ວງໜ້າມີການຈັດລຳດັບຄວາມສຳຄັນຂອງວຽກ ເພື່ອສາມາດປະຕິບັດໜ້າວຽກໃຫ້ສຳເລັດຕາມເປົ້າໝາຍ. ດັ່ງນັ້ນ ເມື່ອເຮົາສົ່ງເສີມທາງດ້ານຄວາມຮູ້ຄວາມສາມາດແລ້ວ ເຊິ່ງອາດປຽບເໝືອນເຮົາມີອາວຸດສຳຄັນ ແຕ່ໃນຊ໊ອບສະກິລ ເຮົາຈະຕ້ອງເຮັດແນວໃດເພື່ອທີ່ຈະສາມາດນຳເອົາຄວາມຮູ້ທີ່ມີໄປໃຊ້ໄດ້ຢ່າງຖືກຕ້ອງ ແລະ ເກີດປະໂຫຍດສູງສຸດ.



ໜຶ່ງໃນກິດຈະກຳ ຝຶກອົບຮົມ ຊ໊ອບສະກິລ ໃຫ້ແກ່ນັກຮຽນ ທີ່ວິທະຍາໄລຄູ

# ການຮ່ວມມືເຢຍລະມັນເພື່ອການພັດທະນາໃນໜຶ່ງຢ່າງດຽວ

*Johann Heilmann,* DVV International

ໃນໄລຍະປີຜ່ານມາ ແລະ ບັນດາຜູ້ມີສ່ວນຮ່ວມໃນວຽກງານການຮ່ວມມືສາກົນເພື່ອການພັດທະນາ, ການປະສານງານລະຫວ່າງບັນດາພາກສ່ວນຕ່າງໆ ແມ່ນມີຄວາມສະຫຼັບຊັບຊ້ອນຂຶ້ນ ແລະ ເພື່ອຮັບປະກັນວ່າການປະສານງານນັ້ນ ຖືກສ້າງຂຶ້ນເພື່ອຜົນປະໂຫຍດອັນສູງສຸດຂອງໂຄງການ, ແຜນງານ ແລະ ຜົນໄດ້ຮັບໃນໄລຍະຍາວ. ໂດຍສຳນຶກໄດ້ວ່າ ນີ້ແມ່ນສິ່ງທ້າທາຍລະຫວ່າງບັນດາອົງການພັດທະນາຈາກປະເທດໜຶ່ງ ແລະ ປະເທດດຽວກັນ, ກະຊວງການຮ່ວມມືເສດຖະກິດ ແລະ ການພັດທະນາ (BMZ) - ກໍແມ່ນໜຶ່ງຂອງຜູ້ໃຫ້ທຶນຫຼັກຂອງ ດີວີວີ ອິນເຕີເນເຊິນແນວ ເຊິ່ງຮຽນວ່າ “Entwicklungszusammenarbeit aus einem Guss” (ວຽກພັດທະນາໃນໜຶ່ງດຽວ). ຂໍ້ຄວາມທີ່ຢູ່ເບື້ອງຫຼັງການຮຽນຮ້ອງນີ້ ຄືການຮ້ອງຂໍໃຫ້ທັງໝົດຂອງອົງການພັດທະນາຂອງເຢຍລະມັນ ເພື່ອສົ່ງເສີມການຮ່ວມມືດ້ານການພັດທະນາຮ່ວມກັນ. ກິດຈະກຳຂອງບັນດາຜູ້ມີສ່ວນຮ່ວມຂອງປະເທດເຢຍລະມັນຄວນຈະເຊື່ອມໂຍງກັນ ແລະ ເໝາະສົມ ແລະ ເສີມສ້າງເຊິ່ງກັນ ແລະ ກັນ ໃຫ້ເປັນໜຶ່ງດຽວກັນ.

ນີ້ແມ່ນສິ່ງທີ່ສະແດງໃຫ້ເຫັນປະຈັກຕາໃນລະຫວ່າງການລົງຢ້ຽມຢາມໂຄງການ ຂອງຫົວໜ້າພະແນກການຮ່ວມມືເພື່ອການພັດທະນາຂອງສະຖານທູດເຢຍລະມັນ ທີ່ນະຄອນຫຼວງວຽງຈັນທີ່ລົງໄປຢ້ຽມຢາມເມືອງນອງ ແລະ ເຊໂປນ ແຂວງສະຫວັນນະເຂດ ໃນເດືອນກຸມພາ 2021. ດັ່ງທີ່ທ່ານຜູ້ອ່ານສ່ວນຫຼາຍຮູ້ວ່າ ເມືອງນອງ ແລະ ເຊໂປນ ແມ່ນເມືອງເປົ້າໝາຍຂອງດີວີວີ ອິນເຕີເນເຊິນແນວ ໃນ ລາວ. ເປັນເວລາ 10 ກວ່າປີແລ້ວ ທີ່ ດີວີວີ ອິນເຕີເນເຊິນແນວ ໄດ້ສະໜັບສະໜູນໃນການກໍ່ຕັ້ງ ແລະ ຄວາມຍືນຍົງຂອງສູນການຮຽນຮູ້ຊຸມຊົນ ໃນພາກຕາເວັນອອກຂອງແຂວງສະຫວັນນະເຂດ ທີ່ມີຊາຍແດນຕິດກັບຫວຽດນາມ. ໃນປະຈຸບັນສູນການຮຽນຮູ້ຊຸມຊົນຫຼາຍແຫ່ງໄດ້ຮັບປະໂຫຍດຈາກເສັ້ນທາງທີ່ສ້າງຂຶ້ນໃໝ່ 2 ເສັ້ນ ເຊິ່ງໄດ້ຮັບທຶນສະໜັບສະໜູນຈາກທະນາຄານເພື່ອການພັດທະນາຂອງປະເທດເຢຍລະມັນ (KFW) ເສັ້ນໜຶ່ງຢູ່ເມືອງນອງ ແລະ ອີກເສັ້ນໜຶ່ງຢູ່ເມືອງເຊໂປນ. ທາງທັງສອງເສັ້ນນີ້ແມ່ນຜ່ານມູ່ບ້ານ ທີ່ມີສູນການຮຽນຮູ້ຊຸມຊົນ ທີ່ ດີວີວີ ອິນເຕີເນເຊິນແນວ ຍັງສືບຕໍ່ສະໜັບສະໜູນຢູ່. ເຊິ່ງນີ້ແມ່ນຈະມີຄວາມສຳຄັນຫຼາຍ ເນື່ອງຈາກວ່າເປັນໄລຍະຂອງການໃຫ້ທຶນໃນປະຈຸບັນຂອງ ດີວີວີ ອິນເຕີເນເຊິນແນວ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍສະເພາະຄວາມອາດສາມາດໃນການສ້າງລາຍຮັບໂດຍຜ່ານການຝຶກອົບຮົມ ແລະ ການໃຫ້ຄຳປຶກສາທີ່ຈັດຂຶ້ນໃນສູນການຮຽນຮູ້ຊຸມຊົນ.

ໃນຂະນະທີ່ການສ້າງລາຍຮັບແມ່ນຂຶ້ນກັບທັກສະ ແລະ ຄວາມສາມາດ ເຊິ່ງຈະຖືກຖ່າຍທອດຜ່ານການຝຶກອົບຮົມ (ໄດ້ນຳສະເໜີໃນບົດຂອງທ່ານ ນາງ ດອກຄຳ ໃນຈົດໝາຍຂາວສະບັບນີ້), ເງື່ອນໄຂເບື້ອງຕົ້ນດ້ານພື້ນຖານໂຄງລ່າງກໍມີບົດບາດສຳຄັນເຊັ່ນກັນ. ເສັ້ນທາງທີ່ສ້າງຂຶ້ນໃໝ່ແມ່ນເສັ້ນທາງປູຢາງໃນເຂດບ້ານຈຸດໃຈກາງ (ເຊັ່ນ: ບ້ານພູນໝາກມີ້ ໃນເມືອງນອງ ຫຼື ບ້ານລະເຕືອງ ໃນເມືອງເຊໂປນ) ເຊັ່ນຕົວຢ່າງ: ການອຳນວຍຄວາມສະດວກໃຫ້ແກ່ການຂາຍຜະລິດຕະພັນຫັດຖະກຳ ທີ່ຜະລິດໂດຍກຸ່ມແມ່ຍິງໃນສູນການຮຽນຮູ້ຊຸມຊົນ ເຊິ່ງເປັນສ່ວນໜຶ່ງຂອງຂອງກິດຈະກຳການສ້າງລາຍຮັບ. ຕະຫຼາດສາມາດໄປຮອດໄດ້ໄວ ພໍ່ຄ້າ ແລະ ນັກທຸລະກິດສາມາດເຂົ້າເຖິງໝູ່ບ້ານໄດ້ງ່າຍຂຶ້ນ. ຫວັງວ່າການເຂົ້າເຖິງທີ່ດີຂຶ້ນຈະຊ່ວຍໃຫ້ສູນການ ຮຽນຮູ້ຊຸມຊົນໄດ້ຮັບການສະໜັບສະໜູນເພີ່ມຂຶ້ນ ໂດຍການສ້າງຄວາມອາດສາມາດຈາກຂັ້ນເມືອງ ແລະ ໂຄງສ້າງຂອງການສຶກສານອກໂຮງຮຽນ.

ບໍ່ວ່າໃນກໍລະນີໃດກໍຕາມ, ວຽກງານການພັດທະນາໃນໜຶ່ງດຽວສະແດງໃຫ້ເຫັນເຖິງຄວາມສາມັກຄີ ແລະ ຜົນປະໂຫຍດຮ່ວມກັນ.



ຕົວແທນຈາກການຮ່ວມມືລາວ-ເຢຍລະມັນໄດ້ໄປຢ້ຽມຢາມໂຄງການຢູ່ເມືອງນອງ ແລະ ເມືອງເຊໂປນ, ແຂວງສະຫວັນນະເຂດ

# ການຮຽນຮູ້ທີ່ບໍ່ມີວັນສິ້ນສຸດ

*ວິລະ ຜຸຍຄຳພິມ*, DVV International



*ວິລະ ຜຸຍຄຳພິມ*
*ຜູ້ຊ່ວຍວຽກຫ້ອງການ*
*ແລະ ຂັບລົດ*

ສະບາຍດີ ຂ້າພະເຈົ້າ ແມ່ນພະນັກງານປະຈຳຫ້ອງການດີວີວີ ອິນຕິເນເຊີນແນວ ເຊິ່ງໄດ້ເຂົ້າມາເຮັດວຽກໄດ້ໄລຍະໜຶ່ງແລ້ວ. ຂ້າພະເຈົ້າໄດ້ມາເຮັດວຽກຢູ່ຫ້ອງການແຫ່ງນີ້ແມ່ນເຮັດໃຫ້ຂ້າພະເຈົ້າມີຄວາມພາກພູມໃຈຫຼາຍ ແລະ ຈະພະຍາຍາມເຮັດວຽກໃຫ້ໄດ້ເຕັມທີ່ຕາມທີ່ໄດ້ຮັບມອບໝາຍ ແລະ ຍັງມີຫຼາຍຢ່າງທີ່ຈະຕ້ອງໄດ້ຝຶກຝົນຮໍ່າຮຽນຕື່ມອີກ. ການເຮັດວຽກກັບເພື່ອນຮ່ວມງານໃໝ່ ສິ່ງແວດລ້ອມໃໝ່ ເຮັດໃຫ້ຂ້າພະເຈົ້າໄດ້ມີໂອກາດຮຽນຮູ້ຫຼາຍຢ່າງ ທັງເປັນບົດຮຽນໃໝ່ ແລະ ບົດຮຽນເກົ່າທີ່ອາດຈະລືມໄປແລ້ວກໍໄດ້ມາຮຽນຄືນອີກ ເຊັ່ນ: ພາສາອັງກິດ ແລະ ຄອມພິວເຕີ.

ຜ່ານການເຮັດວຽກມາໄດ້ໄລະໜຶ່ງ ນອກຈາກໜ້າທີ່ທີ່ໄດ້ຮັບມອບໝາຍແລ້ວ ຂ້າພະເຈົ້າຍັງມີໂອກາດໄດ້ຮຽນຮູ້ສິ່ງໃໝ່ໆຕື່ມອີກ ເຊິ່ງຕ່າງຈາກວຽກທີ່ຜ່ານມາຂອງຂ້າພະເຈົ້າ ມັນທັງເປັນການທົບທວນຄືນບົດຮຽນທີ່ໄດ້ເຄີຍຮຽນມາກ່ອນ ເຊັ່ນການນຳໃຊ້ຄອມພິວເຕີໃນການເຮັດບົດລາຍງານ ຫຼື ຊ່ວຍວຽກເພື່ອນຮ່ວມງານໃນຫ້ອງການ ແຕ່ບາງຄັ້ງກໍຍັງຊັກຊ້າເນື່ອງຈາກ ບໍ່ໄດ້ໃຊ້ມາດົນແລ້ວ ນອກນັ້ນກໍມີເພື່ອຮ່ວມງານໄດ້ແນະນຳໃຫ້ຮຽນວິທີການນຳໃຊ້ຄອມພິວເຕີຄືນໃໝ່, ໄລຍະຫຼັງມາກໍເຫັນໄດ້ວ່າຂ້າພະເຈົ້ານຳໃຊ້ໄດ້ຄ່ອງແຄ້ວຂຶ້ນຕື່ມ, ສຳລັບພາສາອັງກິດ ແມ່ນໄດ້ນຳໃຊ້ຕະຫຼອດໃນໄລຍະຢູ່ຫ້ອງການເມື່ອຂ້າພະເຈົ້າມີໂອກາດຂ້າພະເຈົ້າ ກໍຈະອ່ານປຶ້ມພາສາອັງກິດ, ອ່ານຂ່າວພາສາອັງກິດ ເພື່ອເປັນຮຽນຮູ້ວຽກຕ່າງໆກ່ຽວກັບຫ້ອງການທີ່ກຳລັງດຳເນີນງານຢູ່ ນອກນັ້ນ ຂ້າພະເຈົ້າຍັງໄດ້ອ່ານຈົດໝາຍຂ່າວຂອງຫ້ອງການ ເຊິ່ງມີທັງພາສາລາວ ແລະ ພາສາອັງກິດ ຜ່ານການອ່ານຈົດໝາຍຂ່າວຂ້າພະເຈົ້າຈະອ່ານທັງສອງພາສາ ເພື່ອນຳມາສົມທຽບໃຫ້ເຂົ້າໃຈຄວາມໝາຍຂອງບົດຄວາມພາສາອັງກິດ ແລະ ສຶກສາຄວາມໝາຍຂອງຄຳສັບຕ່າງໆ ໃນບົດຄວາມຕື່ມ.

ໃນການຮຽນຂ້າພະເຈົ້າໃຊ້ເວລາຫວ່າງໃນຊົ່ວໂມງເລີກການ ບັນຍາກາດເຮັດວຽກໃນຫ້ອງການແມ່ນມີສ່ວນຫຼາຍທີ່ເຮັດໃຫ້ຂ້າພະເຈົ້າຢາກຮຽນຮູ້ ໂດຍສະເພາະທ່ານຜູ້ອຳນວຍການປະຈຳພາກພື້ນທີ່ເພິ່ນສາມາດເວົ້າພາສາລາວໄດ້ຢ່າງຄ່ອງແຄ້ວ ນັ້ນເປັນແຮງຈູງໃຈເຮັດໃຫ້ຂ້າພະເຈົ້າສົນໃຈທີ່ຈະຝຶກຝົນພາສາອັງກິດຕື່ມ ແລະ ຍັງມີທັກສະອື່ນໆ ສຳຄັນ ແລະ ຈຳເປັນໃນການເຮັດວຽກ ເຊັ່ນ ທັກສະການສື່ສານໃນຫ້ອງການຈະເວົ້າແນວໃດໃຫ້ເພື່ອຮ່ວມງານຮັກແພງ, ນັບຖື ແລະ ປະຕິບັດຕາມທີ່ໄດ້ຮັບມອບໝາຍ, ການເຮັດວຽກເປັນທີມບໍ່ວ່າຈະເປັນການແບ່ງວຽກ ໃນກໍລະນີທີ່ຈະຕ້ອງໄດ້ເຮັດງຽກຮ່ວມກັນ, ການຊ່ວຍເຫຼືອກັນເກື້ອກູນກັນ, ທັກສະຄວາມເປັນຜູ້ນຳການສ້າງແຮງຈູງໃຈໃຫ້ເພື່ອນຮ່ວມງານປະຕິບັດຕາມທີ່ໄດ້ມອບໝາຍ, ການເຮັດວຽກໂດຍໃຫ້ພະນັກງານກ່ຽວຂ້ອງເປັນຜູ້ຕັດສິນໃຈເອງໂດຍພາຍໃຕ້ການແນະນຳຈາກເພິ່ນ, ການເບິ່ງເຫດ ແລະ ຜົນ, ເອົາໃຈເພິ່ນມາໃສ່ໃຈເຮົາ ເຊິ່ງທັງໝົດນີ້ແມ່ນເຫັນໄດ້ວ່າເປັນສະພາບແວດລ້ອມທີ່ດີ ແລະ ເອື້ອອຳນວຍໃນການຮຽນ.

ສິ່ງທ້າທາຍໃນການເຮັດວຽກຢູ່ດີວີວີ ຂ້າພະເຈົ້າຢາກບອກວ່າການເຮັດວຽກໜັກບໍ່ແມ່ນອຸປະສັກ ຂ້າພະເຈົ້າເຮັດໄດ້ຂໍພຽງແຕ່ມີກຳລັງໃຈ, ມີຮອຍຍິ້ມ ມີຄວາມນິ້ມນວນ, ມີຄວາມເປັນເພື່ອນ ຈາກເພື່ອນຮ່ວມງານກໍພໍແລ້ວ ດັ່ງທີ່ເພິ່ນວ່າຖ້າເຮົາມີຫົວໃຈຮ່ວມກັນ ແມ່ນຫຍັງກໍເກີດຂຶ້ນໄດ້. When you have a big heart and big stuff, anything is possible, ສິ່ງທີ່ຄາດຫວັງໃນອະນາຄົດຂ້າງໜ້າ ຈະຂໍເຮັດວຽກຢ່າງຕັ້ງໜ້າຈົນກວ່າຈະໝົດໂຄງການ ແລະ ເພື່ອເປັນການເສີມທັກສະຂອງຕົນເອງໃນການຮຽນຮູ້ວິຊາຊີບ ຢາກຂໍສະເໜີໃຫ້ໂຄງການຊ່ວຍຊຸກຍູ້ການຮຽນວິຊາຊີບແປງລົດຈັກ ແລະ ລົດໃຫຍ່ເພື່ອເປັນອາຊີບໃນພາຍພາກໜ້າ.



ສ່ວນໜຶ່ງຂອງການເຮັດວຽກແມ່ນກິດຈະກຳ ສ້າງທີມກັບເພື່ອນຮ່ວມງານ

# ອຸປະສັກຂອງແມ່ຍິງໃນການເຂົ້າເຖິງການສຶກສານອກໂຮງຮຽນໃນປະເທດລາວ

*ປາກູລີ ໄຊຍະຊ້າງ*, DVV International



ຜູ້ບໍລິຫານໂຄງການ
ຂອງພວກເຮົາ

ເປັນຫົວຂໍ້ໜຶ່ງທີ່ສຳຄັນ ແລະ ໜ້າສົນໃຈຫຼາຍສຳລັບຫຼາຍອົງກອນ ແລະ ຫຼາຍພາກສ່ວນໂດຍສະເພາະຂະແໜງການສຶກສານອກໂຮງຮຽນ (ກສນ), ຢາກເຂົ້າໃຈເຖິງບັນຫາ ແລະ ອຸປະສັກຂອງແມ່ຍິງໃນການເຂົ້າເຖິງ ກສນ ໃນ ລາວ. ໃນປັດຈຸບັນນີ້ວຽກງານຂະແໜງ ກສນ ຫຼື ການສຶກສາຜູ້ໃຫຍ່ເປັນອີກວຽກງານໜຶ່ງທີ່ກຳລັງ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ໂດຍສະເພາະແມ່ນເລັ່ງໃສ່ຜູ້ທີ່ຢູ່ເຂດຫ່າງໄກ ແລະ ຂາດໂອກາດໃນການສຶກສາ. ສະນັ້ນຫ້ອງການດີວີວີ ອິນເຕີເນເຊິນແນວ ກໍເປັນໜຶ່ງໃນຫ້ອງການທີ່ເຮັດວຽກກ່ຽວກັບການສຶກສາຜູ້ໃຫຍ່ ຮ່ວມກັບກົມ ກສນ ຈຶ່ງມີຄວາມສົນໃຈໃນການສຶກສາບັນຫາ ແລະ ອຸປະສັກຂອງແມ່ຍິງໃນການເຂົ້າເຖິງ ກສນ ໃນປະເທດລາວ, ເພື່ອຈະເປັນບ່ອນອີງ ແລະ ວາງແຜນກິດຈະກຳຂອງ ໂຄງການ ໃນປີ 2021-2023.

ຂ້າພະເຈົ້າພ້ອມກັບຊ່ຽວຊານ Raphaela Hess ຈາກເຢຍລະມັນ, ໄດ້ລົມທົບກັບຂະແໜງ ກສນ ແຂວງບໍລິຄຳໄຊ ແລະ ຂະແໜງ ກສນ ແຂວງຊຽງຂວາງ, ເພື່ອດຳເນີນການວິໄຈກ່ຽວກັບອຸປະສັກຂອງແມ່ຍິງໃນການເຂົ້າເຖິງ ກສນ. ຂະບວນການວິໄຈນີ້ ແມ່ນເລີ່ມລົງເກັບກຳຂໍ້ມູນຕັ້ງແຕ່ ວັນທີ 18-26 ພະຈິກ 2020, ເຊິ່ງໄດ້ລົງເກັບກຳຂໍ້ມູນໃນແຂວງບໍລິຄຳໄຊ ແລະ ແຂວງຊຽງຂວາງ (2 ສູນແຂວງ; 3 ສູນເມືອງ; 2 ສູນການຮຽນຮູ້ຊຸມຊົນ (ສຮຊ) ແລະ 4 ບ້ານທີ່ບໍ່ມີ ສຮຊ). ສຳລັບການເກັບກຳຂໍ້ມູນໄດ້ທັງໝົດ 173 ຄົນ, ໃນນັ້ນ148 ຄົນ ແມ່ນແມ່ຍິງເຊິ່ງກວມເອົາ 76.5%. ແລະ ກຸ່ມເປົ້າໝາຍໃນການເກັບກຳຂໍ້ມູນຊຸດນີ້ແມ່ນມີທັງ ຜູ້ຕາງໜ້າພະນັກງານສູນ ກສນ ຂັ້ນແຂວງ, ຂັ້ນເມືອງ, ຂັ້ນ ສຮຊ, ນັກຮຽນຂອງແຕ່ລະຂັ້ນ ແລະ ພ້ອມດ້ວຍແມ່ຍິງທີ່ບໍ່ສາມາດເຂົ້າເຖິງ ສຮຊ ຂອງແຂວງບໍລິຄຳໄຊ ແລະ ແຂວງຊຽງຂວາງ.

ສຳລັບເຄື່ອງມືໃນການເກັບກຳຂໍ້ມູນ ແລະ ວິໄຈຊຸດນີ້ແມ່ນອີງໃສ່ຄຳຖາມລຸ່ມນີ້ເປັນຫຼັກເຊັ່ນ:

- ມີປັດໃຈໃດແດ່ທີ່ເປັນອຸປະສັກຂອງແມ່ຍິງໃນການເຂົ້າເຖິງລະບົບ ກສນ ເຊັ່ນ: ສຮຊ, ສູນ ກສນ ຂັ້ນເມືອງ, ຂັ້ນແຂວງ ແລະ ສູນພາກ?
- ຈະມີວິທີການແກ້ໄຂບັນຫາ ແລະ ອຸປະສັກຂອງແມ່ຍິງໄດ້ແນວໃດ?
- ລະບົບ ກສນ ມີວິຊາຊີບໃດແດ່ທີ່ໃຫ້ບໍລິການແກ່ແມ່ຍິງ? ແມ່ຍິງສົນໃຈຢາກຮຽນວິຊາຊີບໃດແດ່ໃນລະບົບ ກສນ?
- ລະບົບ ກສນ ມີບົດບາດແນວໃດເພື່ອຮັບປະກັນໃຫ້ແມ່ຍິງສາມາດເຂົ້າເຖິງ ກສນ ແບບຍືນຍົງ? ມີຫຍັງແດ່ທີ່ຕ້ອງໄດ້ປັບປຸງ?

ຫຼັງຈາກການລົງເກັບກຳຂໍ້ມູນ ແລະວິໃຈຄັ້ງນີ້ກໍສັງເກດເຫັນວ່າມີຄວາມຫຍຸ້ງຍາກແຕກຕ່າງກັນ ແລະ ສາມາດສະຫຼຸບວ່າມີ 3 ປັດໃຈຫຼັກເຊັ່ນ: ສິ່ງທີ່ຍັງເປັນອຸປະສັກຂອງສະຖາບັນ (ສູນ ກສນ) ພະນັກງານຂອງ ກສນ ຍັງມີຈຳນວນຈຳກັດ, ໂຄງລ່າງພື້ນຖານຂອງ ກສນ ຍັງມີຂີດຈຳກັດ, ອຸປະກອນນຳໃຊ້ໃນການຝຶກອົບຮົມຍັງບໍ່ພຽງພໍ, ພະນັກງານຍັງມີທັກສະຈຳກັດ ແລະ ບໍ່ມີຄວາມຊຳນານໃນການຝຶກວິຊາຊີບນັ້ນໆ, ການເຜີຍແຜ່ຂໍ້ມູນຂອງ ສູນ ກສນ ຍັງບໍ່ກວ້າງຂວາງເທົ່າທີ່ຄວນ, ການຮ່ວມມືລະຫວ່າງຂະແໜງການສຶກສາຕ່າງໆ ຍັງມີຂີດຈຳກັດ, ໃນລະບົບ ກສນ, ສ່ວນຫຼາຍຜູ້ຊາຍຈະເປັນຜູ້ທີ່ຢູ່ໃນຕຳແໜ່ງທີ່ສາມາດຕັດສິນໃຈຫຼາຍກວ່າຜູ້ຍິງ, ຄວາມຕ້ອງການຂອງແມ່ຍິງແມ່ນຍັງບໍ່ໄດ້ຮັບການປະເມີນຢ່າງພຽງພໍ, ແລະ ການເປີດຫຼັກສູດຕ່າງໆຂອງສູນ ກສນ ຍັງບໍ່ສອດຄ່ອງກັບຄວາມຕ້ອງການຂອງແມ່ຍິງເທົ່າທີ່ຄວນ. ຂະນະດຽວກັນນັ້ນ, ຍັງມີອຸປະສັກທີ່ເກີດຂຶ້ນຕາມສະຖານະການ (ເວລາປະຕິບັດກິດຈະກຳ) ຄືຊຸມຊົນບໍ່ເຫັນຄວາມສຳຄັນຂອງວຽກງານ ກສນ, ຜູ້ທີ່ຮຽນຈົບຈາກສາຍ ກສນ ລ້ວນແຕ່ສະໝັກວຽກຍາກ, ສິດເສລີພາບ ແລະ ຄວາມອາດເປັນໄປໄດ້ຂອງແມ່ຍິງຍັງມີຂີດຈຳກັດ, ຜູ້ຍິງໃຊ້ເວລາສ່ວນຫຼາຍຂອງພວກເຂົາໃນການຮັບຜິດຊອບດູແລຄອບຄົວ ແລະ ຫາລາຍໄດ້ເປັນຫຼັກ, ຂໍ້ຈຳກັດທາງດ້ານການເງິນເຮັດໃຫ້ຂາດໂອກາດໃນການສຶກສາ ແລະ ອີກອັນໜຶ່ງແມ່ນການສື່ສານ ເພາະຜູ້ຍິງຊົນເຜົ່າມີຈຳນວນໜ້ອຍທີ່ສາມາດເຂົ້າໃຈ ແລະ ເວົ້າພາສາລາວໄດ້. ບໍ່ພໍເທົ່ານັ້ນການບໍລິຫານ ແລະ ຈັດການພາຍໃນຂອງແມ່ຍິງເຂົາເອງກໍເປັນ ອີກໜຶ່ງອຸປະສັກເຊັ່ນ: ຜູ້ຍິງຍັງຂາດຄວາມໝັ້ນໃຈໃນຕົນເອງ, ຜູ້ຍິງທີ່ແຕ່ງງານແລ້ວເຂົາຄິດວ່າມັນຊ້າເກີນໄປໃນການຮຽນຮູ້ ແລະ ສຳລັບຜູ້ຍິງທີ່ຍັງໜຸ່ມແມ່ນຍັງບໍ່ມີວິທີການຕັ້ງເປົ້າໝາຍ ແລະ ວາງແຜນຊີວິດຂອງຕົນເອງ.

ການສະໜັບສະໜູນກິດຈະກຳ ”ການສ້າງຄວາມເຂັ້ມແຂງ ໃຫ້ແມ່ຍິງ” ຂອງຫ້ອງການດີວີວີ ອາດບໍ່ ຫຼາຍແຕ່ກໍຫວັງວ່າຈະເປັນ ຕົ້ນແບບທີ່ດີສຳລັບ ການສຶກສາຜູ້ໃຫຍ່ ທີ່ສາມາດເຂົ້າເຖິງ ກຸ່ມຄົນດ້ອຍໂອກາດ ຫຼື ອາດບໍ່ມີໂອກາດ ເລີຍໃນຊົນນະບົດເປັນຕົ້ນ.



vhs DVV International

Education for Everyone. Worldwide.
Lifelong.



# ການສື່ສານອອນໄລ - ເຮົາຕ້ອງການເຄື່ອງມືໃດ?

*ດາລຸນີ ສີສຸລາດ*, DVV International

ໃນສະຖານະການລະບາດຂອງໂຄວິດ-19 ໄດ້ສົ່ງຜົນກະທົບໃນວົງກວ້າງ ຫຼາຍພາກສ່ວນທັງໃນພາກການສຶກສາ ແລະ ພາກທຸລະກິດ ໄດ້ມີການປັບໂຕໂດຍນໍາເຕັກໂນໂລຊີດິຈິຕອລມາເປັນເຄື່ອງມືສື່ສານເພື່ອຫຼີກລ່ຽງການພົບປະ ແລະ ການຢູ່ໃນສະຖານທີ່ ທີ່ມີການລວມໂຕຂອງຄົນຈໍານວນຫຼາຍ.

ຈາກຄວາມກ້າວໜ້າຂອງເຕັກໂນໂລຊີໃນປະຈຸບັນ ເຮັດໃຫ້ມີຜູ້ໃຫ້ບໍລິການຈໍານວນຫຼາຍພັດທະນາແອັບພລິເຄເຊິ່ນ ການປະຊຸມຜ່ານວີດີໂອ (Video Conference) ເພື່ອສ້າງຄວາມສະດວກ ສະບາຍ ແລະ ຮອງຮັບການຮຽນ ແລະ ການເຮັດວຽກຜ່ານຊ່ອງທາງອອນໄລ ເຊິ່ງຖືວ່າເປັນປະໂຫຍດຫຼາຍໃນໄລຍະວິກິດການລະບາດຂອງ ໂຄວິດ-19 ໃນມື້ນີ້ເຮົາຈະມາສະເໜີເຄື່ອງມື(applications) ການປະຊຸມຜ່ານວີດີໂອທີ່ພວກເຮົາສາມາດດາວໂຫຼດ ແລະ ໃຊ້ຟຣີ ໄດ້ຈໍານວນໜຶ່ງ.

### Zoom

- ຮອງຮັບຜູ້ໃຊ້ສູງສຸດ 100 ຄົນ
- ການປະຊຸມແບບກຸ່ມຈໍາກັດເວລາ 40 ນາທີ
- ແບ່ງປັນໜ້າຈໍໂດຍກົງກັບອຸປະກອນໃນກຸ່ມຜູ້ຮ່ວມປະຊຸມໄດ້
- ມີກະດານໃຫ້ໃຊ້ຂຽນຄືກັນກັບປະຊຸມແບບເຫັນໜ້າກັນ
- ແບ່ງປັນເນື້ອໃນ ຮູບພາບ ແລະ ເອກະສານໄດ້
- ສາມາດບັນທຶກວິດີໂອກອງປະຊຸມອອນໄລໄດ້
- ຮອງຮັບການເຮັດວຽກໄດ້ທຸກອຸປະກອນ

### Google Hangouts

- ຮອງຮັບຜູ້ໃຊ້ພື້ນຖານ 10 ຄົນ
- ແບ່ງປັນເນື້ອໃນ ຮູບພາບ ແລະ ເອກະສານໄດ້
- ຮອງຮັບການເຮັດວຽກໄດ້ທຸກອຸປະກອນ
- ຜູ້ໃຊ້ຕ້ອງມີບັນຊີ ຂອງ gmail

### Line video call

- ຮອງຮັບຜູ້ໃຊ້ສູງສຸດ 200 ຄົນ
- ແບ່ງປັນໜ້າຈໍກັບອຸປະກອນໃນກຸ່ມຜູ້ຮ່ວມປະຊຸມໄດ້ສະເພາະເປີດໃນຄອມພິວເຕີ
- ແບ່ງປັນເນື້ອໃນ ຮູບພາບ ແລະ ເອກະສານໄດ້
- ບັນທຶກວິດີໂອການປະຊຸມ
- ຮອງຮັບການເຮັດວຽກໄດ້ທຸກອຸປະກອນ
- ຖ່າຍທອດສົດ

ຄວາມສາມາດພິເສດອີກຢ່າງໜຶ່ງກໍຄືການແຈ້ງຂ່າວສານໃຫ້ທຸກຄົນໄດ້ຮັບຮູ້ໃນກຸ່ມຜູ້ໃຊ້ ແລະ ສາມາດສ້າງອາລະບໍ້າຮູບເພື່ອສະດວກໃນການຈັດການຟາຍຮູບ ແລະ ເອກະສານໄດ້ງ່າຍຂຶ້ນ.

### True VROOM

- ຮອງຮັບຜູ້ໃຊ້ໄດ້ສູງສຸດ 1.500 ຄົນ
- ແບ່ງປັນໜ້າຈໍໂດຍກົງກັບອຸປະກອນໃນກຸ່ມຜູ້ຮ່ວມປະຊຸມໄດ້
- ແບ່ງປັນເນື້ອໃນ ຮູບພາບ ແລະ ເອກະສານໄດ້
- ສາມາດບັນທຶກວີດີໂອກອງປະຊຸມອອນໄລໄດ້
- ຮອງຮັບການເຮັດວຽກໄດ້ທຸກອຸປະກອນ



### FaceTime

- ຮອງຮັບໃຊ້ສູງສຸດ 32 ຄົນ
- ແບ່ງປັນໜ້າຈໍກັບອຸປະກອນໃນກຸ່ມຜູ້ຮ່ວມປະຊຸມ ໄດ້ສະເພາະເປີດໃນຄອມພິວເຕີ
- ແບ່ງປັນເນື້ອໃນ ຮູບພາບ ແລະ ເອກະສານໄດ້
- ຮອງຮັບການເຮັດວຽກສະເພາະລະບົບ iOS

### Microsoft Teams

- ຮອງຮັບໃຊ້ສູງສຸດ 250 ຄົນ
- ແບ່ງປັນໜ້າຈໍກັບອຸປະກອນໃນກຸ່ມຜູ້ຮ່ວມປະຊຸມໄດ້ ສະເພາະເປີດໃນຄອມພິວເຕີ
- ແບ່ງປັນເນື້ອໃນ ຮູບພາບ ແລະ ເອກະສານໄດ້
- ບັນທຶກວີດີໂອກອງປະຊຸມໄດ້
- ຮອງຮັບການເຮັດວຽກໄດ້ທຸກອຸປະກອນ
- ເຊື່ອມຕໍ່ກັບ ປະຕິທິນໃນ Outlook ເພື່ອນັດປະຊຸມໄດ້
- ສາມາດຕໍ່ Plugin ກັບໂປຣແກມ Zoo

### Facebook Messenger

- ຮອງຮັບໃຊ້ສູງສຸດ 6 ຄົນ
- ແບ່ງປັນໜ້າຈໍກັບອຸປະກອນໃນກຸ່ມຜູ້ຮ່ວມປະຊຸມໄດ້ສະເພາະເປີດໃນ ຄອມພິວເຕີ
- ແບ່ງປັນເນື້ອໃນ ຮູບພາບ ແລະ ເອກະສານໄດ້
- ຮອງຮັບການເຮັດວຽກໄດ້ທຸກອຸປະກອນ

"ເຕັກໂນໂລຊີ ເຊື່ອມຕໍ່ພວກເຮົາ ໃນຂະນະທີ່ພວກເຮົາແຍກຈາກກັນ ຊ່ວຍໃຫ້ພວກເຮົາປອດໄພ ແລະ ມີປະສິດທິພາບ. ໄລຍະເດືອນຜ່ານມາເຮົາໄດ້ເຫັນເຖິງພະລັງຂອງການປະຊຸມຜ່ານວີດີໂອນໍາພາພວກເຮົາມາພົບກັນ - ບໍ່ວ່າຈະເປັນການເຮັດວຽກຢູ່ຫ້ອງການ ໂຮງຮຽນ ຫຼື ເຮັດວຽກຢູ່ເຮືອນ ເຮົາຕ້ອງການເຄື່ອງມືທີ່ປອດໄພ ແລະ ເປັນເປັນທີ່ຄຸ້ນເຄີຍທີ່ສາມາດໃຊ້ໄດ້ໃນທຸກສະຖານະການ". ©

ໃນແງ່ຂອງການລະບາດໃຫຍ່ຂອງໂຄວິດ-19 ນີ້ອາດແມ່ນຈຸດເລີ່ມຕົ້ນໃຫ້ພວກເຮົາປັບໂຕເຂົ້າກັບໂລກດິຈິຕອລ.

*ແຫຼ່ງຂໍ້ມູນ: www.dct.or.th*

*© https://blog.google/products/meet/bringing-google-meet-to-more-people/*

*Javier Soltero, Vice President & GM, G Suite*

**ສິ່ງທີ່ໜ້າສົນໃຈ**

**Important Website in region**

www.nfedi.org
www.rda.org.la
www.aspbae.org
www.seameocelll.org

**ສິ່ງພິມທີ່ໜ້າສົນໃຈ**

Adult Education and Development
AED 86 (2019): The good adult educator
AED 85: Role and Impact of Adult Education
AED 84: Inclusion and Diversity
AED 83: Skills and Competencies

**International Perspectives in Adult Education**

IPE 79(2019): The contribution of adult education to active participatory citizenship
IPE 77: Rethinking adult learning and education - Asia perspectives
IPE 78: Adult education as a key to development - challenges and success factors
IPE 76: Refugees: A challenge for adult education

**ຈົດໝາຍຂ່າວ**

The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

**ສິ່ງພິມໃໝ່**

**DVV International Annual Report 2020**
**Reaching the Marginalized -** Good Practices in ALE in the Middle East, Southeast and South Asia
**Handbook for NFE Facilitators**
**Soft Skills** Training Manual for Falicitator
**Soft Skills** Instructional Package
**Curriculum globALE in** Lao language

**ຈັດພິມໂດຍ ດີວີວີ ອິນເຕີເນເຊິນແນວ**
**ຮ່ວມກັບຄູ່ຮ່ວມພັດທະນາໃນ ສປປ ລາວ, ກຳປູເຈຍ ແລະ**
**ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້**
**ທ່ານສາມາດຂໍຈົດໝາຍຂ່າວນີ້ໄດ້ທີ່ ຫ້ອງການຂອງພວກເຮົາ**

**ກອງບັນນາທິການ**: ພິລານີ ພົດສະໄໝ, ອຸ່ນເພັງ ຄຳມັງ,
ຂັນທອງ ອິນທະຈັກ
**ທີມງານບັນນາທິການ**: ດາລຸນີ ສີສຸລາດ, ດອກຄຳ ຊົມສີຫາປັນຍາ,
ສົມໃຈ ແກ້ວເມກ
**ບັນນາທິການ**: ໂຢຮັນ ແຮລເມັນ

**ດີວີວີ ອິນເຕີເນເຊິນແນວ**
ຫ້ອງການປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la

# Education for Everyone. Worldwide. Lifelong.